# ສາລະບານ

**ພາກທີ I ບົດບັນຍັດທົ່ວໄປ....... 1**

ມາດຕາ 1. (ປັບປຸງ) ຈຸດປະສົງ ....... 1

ມາດຕາ 2. (ປັບປຸງ) ການສົ່ງເສີມການລົງທຶນ ....... 1

ມາດຕາ 3. (ປັບປຸງ) ການອະທິບາຍຄໍາສັບ....... 2

ມາດຕາ 4. (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມການລົງທຶນ ....... 3

ມາດຕາ 5. (ປັບປຸງ) ຫລັກການກ່ຽວກັບການສົ່ງເສີມການລົງທຶນ ....... 3

ມາດຕາ 6. (ປັບປຸງ) ຂອບເຂດການນໍາໃຊ້ກົດໝາຍ ....... 4

ມາດຕາ 7. ການຮ່ວມມືສາກົນ ....... 4

**ພາກທີ II ຮູບການການລົງທຶນ....... 4**

ມາດຕາ 8. (ປັບປຸງ) ຮູບການ ການລົງທຶນ....... 4

ມາດຕາ 9 ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫລື ຕ່າງປະເທດ....... 4

ມາດຕາ10. (ປັບປຸງ) ການລົງທຶນແບບຮຸ້ນສ່ວນລະຫວ່າງຜູ້ລົງທຶນພາຍໃນກັບຕ່າງປະເທດ....... 5

ມາດຕາ 11. (ປັບປຸງ) ການລົງທຶນແບບທຸລະກິດຮ່ວມຕາມສັນຍາ ....... 5

ມາດຕາ 12. (ປັບປຸງ) ການກໍານົດທຶນຈົດທະບຽນ ....... 5

ມາດຕາ 13. (ໃໝ່) ການຖອກທຶນຈົດທະບຽນ ....... 5

ມາດຕາ 14. (ໃໝ່) ການເພີ່ມທຶນຈົດທະບຽນ ....... 6

**ພາກທີ III ກິດຈະການການລົງທຶນ....... 6**

ໝວດທີ 1 ປະເພດກິດຈະການການລົງທຶນ....... 6

ມາດຕາ 15. (ເກົ່າ 13) (ປັບປຸງ) ປະເພດກິດຈະການການລົງທຶນ ....... 6

ມາດຕາ 16. (ເກົ່າ 14) (ປັບປຸງ) ກິດຈະການທົ່ວໄປ....... 6

ມາດຕາ 17. (ເກົ່າ 15) (ປັບປຸງ) ກິດຈະການສໍາປະທານ....... 7

ມາດຕາ 18. (ໃໝ່) ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ....... 7

ມາດຕາ 19. (ເກົ່າ16) (ປັບປຸງ) ກິດຈະການພັດທະນາເຂດເສດຖະກິດພິເສດ ....... 7

ໝວດທີ 2 ການສະເໜີຂໍລົງທຶນ ....... 7

ມາດຕາ 20. (ເກົ່າ 17)(ປັບປຸງ) ການພິຈາລະນາການລົງທຶນ ....... 7

ມາດຕາ 21. (ໃໝ່) ໃບອະນຸຍາດລົງທຶນ ....... 8

ມາດຕາ 22. (ເກົ່າ20)(ປັບປຸງ) ອາຍຸການລົງທຶນ ....... 8

ໝວດທີ 3(ໃໝ່) ການລົງທຶນໃນກິດຈະການທີ່ມີການຄຸ້ມຄອງສະເພາະ ....... 8

ມາດຕາ 23. (ໃໝ່) ປະເພດກິດຈະການທີ່ມີການຄຸ້ມຂອງສະເພາະ....... 8

ມາດຕາ 24. (ໃໝ່) ການສະເໜີຂໍລົງທຶນ ແລະ ກໍານົດເວລາການພິຈາລະນາ....... 8

ມາດຕາ 25. (ໃໝ່) ຂັ້ນຂອງການພິຈາລະນາການສະເໜີຂໍລົງທຶນ. .................................................. 9
ໝວດທີ 4 (ໃໝ່) ການອອກໄປລົງທຶນຢູ່ຕ່າງປະເທດຂອງຜູ້ລົງທຶນພາຍໃນ.......................................... 9
ມາດຕາ 26. (ໃໝ່) ການສະເໜີອອກໄປລົງທຶນຢູ່ຕ່າງປະເທດ ........................................................ 9
ມາດຕາ 27. (ໃໝ່) ເງື່ອນໄຂການອອກໄປລົງທຶນຢູ່ຕ່າງປະເທດ..................................................... 9
ມາດຕາ 28. (ໃໝ່) ສິດ ແລະ ພັນທະຂອງຜູ້ລົງທຶນ ທີ່ອອກໄປລົງທຶນຢູ່ຕ່າງປະເທດ.............................. 9
ໝວດທີ5 ການລົງທຶນໃນກິດຈະການສຳປະທານ ແລະ ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ 10
ມາດຕາ 29. (ເກົ່າ21) ການສະເໜີຂໍລົງທຶນໃນກິດຈະການສຳປະທານ ........................................... 10
ມາດຕາ 30. (ເກົ່າ22) ການຄັດເລືອກເອົາຜູ້ລົງທຶນໃນກິດຈະການສຳປະທານ .................................... 10
ມາດຕາ31. (ເກົ່າ23)(ປັບປຸງ) ການພິຈາລະນາການລົງທຶນໃນກິດຈະການສຳປະທານ .......................... 10
ມາດຕາ 32. (ເກົ່າ25)(ປັບປຸງ) ການອອກໃບອະນຸຍາດລົງທຶນ ໃນກິດຈະການສຳປະທານ ..................... 11
ມາດຕາ 33. (ເກົ່າ26)(ປັບປຸງ) ເນື້ອໃນຂອງສັນຍາສຳປະທານ ..................................................... 11
ມາດຕາ 34. (ເກົ່າ27)(ປັບປຸງ) ການດັດແກ້ເນື້ອໃນຂອງສັນຍາສຳປະທານ ແລະ ໃບອະນຸຍາດລົງທຶນ ໃນກິດຈະການສຳປະທານ.................................................................................................. 11
ມາດຕາ 35. (ເກົ່າ28)(ປັບປຸງ) ອາຍຸການລົງທຶນໃນກິດຈະການສຳປະທານ ...................................... 11
ມາດຕາ 36. (ໃໝ່) ການຕໍ່ອາຍຸສັນຍາ .................................................................................. 12
ມາດຕາ 37. (ໃໝ່) ການມອບ, ໂອນ ສິດ ຕາມສັນຍາຫລື ໂອນຮຸ້ນ............................................... 12
ມາດຕາ 38. (ໃໝ່) ການລົງທຶນໃນກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ...................... 12
ໝວດທີ 6 ການລົງທຶນໃນກິດຈະການການພັດທະນາເຂດເສດຖະກິດພິເສດ ..................................... 13
ມາດຕາ 39. (ເກົ່າ34)(ປັບປຸງ) ຫລັກການສ້າງຕັ້ງເຂດເສດຖະກິດພິເສດ......................................... 13
ມາດຕາ 40. (ເກົ່າ 35)(ປັບປຸງ) ຂັ້ນຕອນການສ້າງຕັ້ງ............................................................. 13
ມາດຕາ 41. (ເກົ່າ43).(ປັບປຸງ) ການສະເໜີລົງທຶນໃນເຂດເສດຖະກິດພິເສດ .................................. 14
ໝວດທີ 7 ການບໍລິການການລົງທຶນປະຕູດຽວ ....................................................................... 14
ມາດຕາ 42. (ເກົ່າ44).(ປັບປຸງ) ການບໍລິການການລົງທຶນປະຕູດຽວ............................................. 14
ມາດຕາ 43. (ເກົ່າ45)(ປັບປຸງ) ຫລັກການການບໍລິການການລົງທຶນປະຕູດຽວ .................................. 14
ໝວດທີ 8 ຫ້ອງການຜູ້ຕາງໜ້າແລະສາຂາ ............................................................................ 14
ມາດຕາ 44. (ເກົ່າ47)(ປັບປຸງ) ຫ້ອງການຜູ້ຕາງໜ້າ ................................................................ 14
ມາດຕາ 45. (ເກົ່າ48)(ປັບປຸງ) ສາຂາຂອງນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ .............................. 15
ມາດຕາ 46. (ໃໝ່) ປະເພດສາຂາ: ..................................................................................... 15
ມາດຕາ 47. (ໃໝ່) ສາຂາບໍລິສັດພາຍໃນ ............................................................................. 15
ມາດຕາ 48. (ໃໝ່) ສາຂາບໍລິສັດຕ່າງປະເທດ ........................................................................ 16
**ພາກທີ IV ການສົ່ງເສີມ ແລະ ປົກປ້ອງການລົງທຶນ................................................................ 16**

ໝວດທີ 1 ການສົ່ງເສີມການລົງທຶນດ້ານພາສີ-ອາກອນ ........................................................... 16
ມາດຕາ 49. (ປັບປຸງ) ຂະແໜງການທີ່ໄດ້ຮັບນະໂຍບາຍສົ່ງເສີມ................................................. 16
ມາດຕາ 50. (ເກົ່າ) ເຂດສົ່ງເສີມການລົງທຶນ ............................................................................. 17
ມາດຕາ 51. (ເກົ່າ)(ປັບປຸງ) ນະໂຍບາຍດ້ານອາກອນກຳໄລ ........................................................ 17
ມາດຕາ 52. (ເກົ່າ)(ປັບປຸງ) ນະໂຍບາຍດ້ານພາສີ-ອາກອນອື່ນ..................................................... 18
ມາດຕາ 53. (ເກົ່າ) ນະໂຍບາຍການເຂົ້າເຖິງແຫລ່ງທຶນ .............................................................. 18
ມາດຕາ 54. (ເກົ່າ)(ປັບປຸງ) ນະໂຍບາຍສົ່ງເສີມສະເພາະພິເສດ ..................................................... 19
ມາດຕາ 55. (ເກົ່າ)(ປັບປຸງ) ການຈັດຕັ້ງປະຕິບັດກ່ຽວກັບນະໂຍບາຍດ້ານພາສີ-ອາກອນ ....................... 19
ໝວດທີ 2 ການສົ່ງເສີມການລົງທຶນດ້ວຍນະໂຍບາຍດ້ານອື່ນໆ..................................................... 19
ມາດຕາ 56. (ເກົ່າ57) ການສົ່ງເສີມດ້ານຂໍ້ມູນຂ່າວສານ ............................................................ 19
ມາດຕາ 57. (ເກົ່າ59)(ປັບປຸງ) ການເປີດກວ້າງນະໂຍບາຍສົ່ງເສີມ................................................. 20
ໝວດທີ 3 ການປົກປ້ອງການລົງທຶນ........................................................................................ 20
ມາດຕາ 58. (ເກົ່າ60) ການປົກປ້ອງການລົງທຶນ ........................................................................ 20
ມາດຕາ 59. (ເກົ່າ61)(ປັບປຸງ) ຮູບການປົກປ້ອງການລົງທຶນ ........................................................ 20
ມາດຕາ 60. (ເກົ່າ62) ການປົກປ້ອງຊັບສິນທາງປັນຍາ............................................................... 20
ມາດຕາ 61. (ໃໝ່) ການບໍລິການຫຼັງການອອກອະນຸຍາດ ............................................................ 20
**ພາກທີ V ສິດແລະພັນທະຂອງຜູ້ລົງທຶນ................................................................................. 21**
ໝວດທີ 1 ສິດຂອງຜູ້ລົງທຶນ ................................................................................................. 21
ມາດຕາ 62. (ເກົ່າ64)(ປັບປຸງ) ສິດໃນການລົງທຶນ...................................................................... 21
ມາດຕາ 63. (ເກົ່າ 65)(ປັບປຸງ) ສິດໃນການຄຸ້ມຄອງ-ບໍລິຫານກິດຈະການການລົງທຶນຂອງຕົນ ............. 22
ມາດຕາ 64. (ເກົ່າ 66)(ປັບປຸງ) ສິດໃນການວ່າຈ້າງແຮງງານ ........................................................ 22
ມາດຕາ 65. (ເກົ່າ 67)(ປັບປຸງ) ສິດໃນການຢູ່ອາໄສສຳລັບຜູ້ລົງທຶນຕ່າງປະເທດ............................... 22
ມາດຕາ 66. (ເກົ່າ 68) ສິດຂອງຜູ້ລົງທຶນຕ່າງປະເທດໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປ
ຕ່າງປະເທດ ..................................................................................................................... 23
ໝວດທີ 2 ພັນທະຂອງຜູ້ລົງທຶນ ............................................................................................ 23
ມາດຕາ 67 (ໃໝ່) ພັນທະຕໍ່ລັດ............................................................................................ 23
ມາດຕາ 68. (ໃໝ່) ພັນທະດ້ານສັງຄົມ.................................................................................... 23
ມາດຕາ 69. (ໃໝ່) ພັນທະດ້ານສິ່ງແວດລ້ອມ ........................................................................... 24
**ພາກທີ VI ຂໍ້ຫ້າມ ................................................................................................................ 24**
ມາດຕາ 70. (ເກົ່າ 71)(ປັບປຸງ) ຂໍ້ຫ້າມທົ່ວໄປ ........................................................................... 24
ມາດຕາ 71. (ເກົ່າ72)(ປັບປຸງ) ຂໍ້ຫ້າມສຳລັບພະນັກງານ .......................................................... 24

ມາດຕາ 72. (ເກົ່າ 73)(ປັບປຸງ) ຂໍ້ຫ້າມສຳລັບຜູ້ລົງທຶນ ........................................ 25
**ພາກທີ VII ການໂຈະ, ປ່ຽນແປງ, ຖອນ, ຍົກເລີກ ແລະ ສິ້ນສຸດການລົງທຶນ........................................ 25**
ມາດຕາ 73. (ເກົ່າ 74)(ປັບປຸງ) ການໂຈະການລົງທຶນ........................................ 25
ມາດຕາ 74. (ເກົ່າ 75)(ປັບປຸງ) ການປ່ຽນແປງການລົງທຶນ........................................ 26
ມາດຕາ 75. (ເກົ່າ 76)(ປັບປຸງ) ການຖອນ ແລະ ການຍົກເລີກການລົງທຶນ ........................................ 26
ມາດຕາ 76. (ເກົ່າ 77)(ປັບປຸງ) ການສິ້ນສຸດການລົງທຶນ ........................................ 26
**ພາກທີ VIII ການແກ້ໄຂຂໍ້ຂັດແຍ່ງ........................................ 27**
ມາດຕາ 77. (ເກົ່າ 78)(ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ........................................ 27
ມາດຕາ 78. (ເກົ່າ 79)(ປັບປຸງ) ການແກ້ໄຂດ້ວຍການປະນີປະນອມກັນ........................................ 27
ມາດຕາ 79. (ເກົ່າ 80)(ປັບປຸງ) ການແກ້ໄຂທາງດ້ານບໍລິຫານ ........................................ 27
ມາດຕາ 80. (ເກົ່າ 81)(ປັບປຸງ) ການແກ້ໄຂໂດຍສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ ສປປ ລາວ ຫຼື ຕ່າງປະເທດ........................................ 27
ມາດຕາ 81. (ເກົ່າ82)(ປັບປຸງ) ການຮ້ອງຟ້ອງຕໍ່ສານ ........................................ 28
**ພາກທີ IX ການຄຸ້ມຄອງ ແລະ ຕິດຕາມ ກວດກາ........................................ 28**
ໝວດທີ 1 ການຄຸ້ມຄອງ ........................................ 28
ມາດຕາ 82. (ໃໝ່) ອົງການຄຸ້ມຄອງ........................................ 28
ມາດຕາ 83. (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ........................................ 29
ມາດຕາ 84. (ໃໝ່) ສິດ ແລະ ໜ້າທີ່ຂອງພະແນກແຜນການ ແລະ ການລົງທຶນແຂວງ, ນະຄອນຫລວງ...... 29
ມາດຕາ 85. (ໃໝ່) ສິດແລະໜ້າທີ່ຂອງຫ້ອງການແຜນການແລະການລົງທຶນເມືອງ , ເທດສະບານ, ນະຄອນ 30
ມາດຕາ 86. (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການກ່ຽວຂ້ອງ ຂັ້ນສູນກາງ........................................ 31
ມາດຕາ 87. (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ ........................................ 31
ໝວດທີ 2 ການກວດກາ ........................................ 31
ມາດຕາ 88. (ເກົ່າ 92)(ປັບປຸງ) ອົງການກວດກາການລົງທຶນ ........................................ 31
ມາດຕາ 89. (ເກົ່າ 93) ເນື້ອໃນການກວດກາ ........................................ 31
ມາດຕາ 90. (ເກົ່າ 94))(ປັບປຸງ) ປະເພດການກວດກາ........................................ 32
ມາດຕາ 91. (ເກົ່າ 95) ຮູບການການກວດກາ........................................ 32
**ພາກທີ X ນະໂຍບາຍຕໍ່ຜູ້ມີຜົນງານແລະມາດຕະການຕໍ່ຜູ້ລະເມີດ........................................ 33**
ມາດຕາ 92. (ເກົ່າ 96) ນະໂຍບາຍຕໍ່ຜູ້ມີຜົນງານ........................................ 33
ມາດຕາ 93. (ເກົ່າ 97) ມາດຕະການຕໍ່ຜູ້ລະເມີດ ........................................ 33
**ພາກທີ XI ບົດບັນຍັດສຸດທ້າຍ........................................ 33**

ມາດຕາ 94. (ເກົ່າ 98) ການຈັດຕັ້ງປະຕິບັດ ........................................................................ 33
ມາດຕາ 95. (ເກົ່າ 99)(ປັບປຸງ) ຜົນສັກສິດ........................................................................ 33

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====00=========------

ສະພາແຫ່ງຊາດ ເລກທີ:............/ສພຊ

ນະຄອນຫລວງວຽງຈັນ, ວັນທີ........................

# ຮ່າງກົດໝາຍ
# ວ່າດ້ວຍການສົ່ງເສີມການລົງທຶນ

**(ສະບັບປັບປຸງປີ 2016)**

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ກຳນົດຫລັກການ, ລະບຽບການ ແລະ ມາ ດຕະການກ່ຽວກັບການສົ່ງເສີມ ການຄຸ້ມຄອງການລົງທຶນທັງພາຍໃນແລະ ຕ່າງປະເທດ ຢູ່ ສປປ ລາວ ແລະການລົງທຶນຂອງພາກທຸລະກິດພາຍໃນອອກໄປລົງທຶນຢູ່ຕ່າງປະເທດ ເພື່ອເຮັດໃຫ້ການລົງທຶນມີຄວາມສະດວກ, ວ່ອງໄວ, ຖືກຕ້ອງ, ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ ຂອງລັດ, ຂອງປະຊາຊົນ ແນໃສ່ປະກອບສ່ວນຢ່າງຕັ້ງໜ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ເຕີບໃຫຍ່, ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມສີວິໄລ, ເຂັ້ມແຂງ, ຍືນຍົງຕາມທິດການພັດທະນາ ແລະ ເຕີບໂຕແບບສີຂຽວ, ເຊື່ອມໂຍງກັບເສດຖະກິດພາກພື້ນ ແລະ ສາກົນ

### ມາດຕາ 2. (ປັບປຸງ) ການສົ່ງເສີມການລົງທຶນ

ການສົ່ງເສີມການລົງທຶນ ແມ່ນການວາງນະໂຍບາຍ ການສ້າງສະພາບແວດລ້ອມ ແລະເງື່ອນໄຂໃນດ້ານຕ່າງໆແກ່ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດເພື່ອໃຫ້ຜູ້ລົງທຶນສາມາດດຳເນີນທຸລະ

ກິດຢູ່ ສປປ ລາວ ໄດ້ຢ່າງສະດວກ, ວ່ອງໄວ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ລວມທັງການອະນຸຍາດອອກໄປລົງທຶນຢູ່ຕ່າງປະເທດຂອງຫົວໜ່ວຍທຸລະກິດ.

### ມາດຕາ 3. (ປັບປຸງ) ການອະທິບາຍຄຳສັບ

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ມີຄວາມໝາຍດັ່ງນີ້:

1. **ການລົງທຶນ** ໝາຍເຖິງການນຳເອົາເງິນທຶນ, ຊັບສິນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອດຳເນີນທຸລະກິດຢູ່ ສປປ ລາວ ຫລືອອກໄປລົງທຶນຢູ່ຕ່າງປະເທດ;
2. **ຜູ້ລົງທຶນ** ໝາຍເຖິງບຸກຄົນ ຫລື ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລົງທຶນດຳເນີນທຸລະກິດຢູ່ ສປປ ລາວ ຫລື ອອກໄປລົງທຶນຢູ່ຕ່າງປະເທດ
3. **ຜູ້ລົງທຶນພາຍໃນ** ໝາຍເຖິງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ນິຕິບຸກຄົນຂອງຜູ້ທີ່ດຳລົງຊີວິດ ແລະ ດຳເນີນທຸລະກິດຢູ່ ສປປ ລາວ;
4. **ຜູ້ລົງທຶນຕ່າງປະເທດ** ໝາຍເຖິງບຸກຄົນ ຫລື ນິຕິບຸກຄົນຕ່າງປະເທດ ທີ່ມາດຳເນີນທຸລະກິດຢູ່ ສປປ ລາວ;
5. **ທຶນທີ່ມີຕົວຕົນ** ໝາຍເຖິງເງິນຕາ, ສັງຫາລິມະຊັບ ແລະ ອະສັງຫາລິມະຊັບ;
6. **ທຶນທີ່ບໍ່ມີຕົວຕົນ** ໝາຍເຖິງຊັບສິນທາງປັນຍາ ລາຍຮັບທີ່ຈະເກີດຂຶ້ນໃນອະນາຄົດ ສິດເຊົ່າ, ສິດທາງດ້ານການຄ້າ, ມູນຄ່າການສຳປະທານ ແລະ ອື່ນໆ;
7. **ກິດຈະການທີ່ມີການຄຸ້ມຄອງສະເພາະ** ໝາຍເຖິງປະເພດທຸລະກິດທີ່ມີຄວາມອ່ອນໄຫວສູງ ເປັນຕົ້ນ ຕໍ່ຄວາມໝັ້ນຄົງຂອງຊາດ, ເສດຖະກິດ, ວັດທະນະທຳ-ສັງຄົມ, ສິ່ງແວດລ້ອມ, ສຸຂະພາບ ແລະ ຄວາມປອດໄພຂອງພົນລະເມືອງ;
8. **ການສຳປະທານ** ໝາຍເຖິງການທີ່ລັດອະນຸຍາດໃຫ້ນິຕິບຸກຄົນນຳໃຊ້ສິດໃນກຳມະສິດຕ່າງໆທີ່ເປັນຂອງລັດຕາມເງື່ອນໄຂ ແລະ ກຳນົດເວລາທີ່ແນ່ນອນ ໂດຍ ຖືກຕ້ອງຕາມລະບຽບກົດໝາຍ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ;
9. **ສັນຍາສຳປະທານ** ໝາຍເຖິງສັນຍາທີ່ເຊັນກັນ ລະຫວ່າງ ນິຕິບຸກຄົນ ກັບ ອົງການທີ່ໄດ້ຮັບມອບໝາຍຂອງລັດຖະບານ ທີ່ໃຫ້ສິດໃນການດຳເນີນທຸລະກິດ ຫຼື ການພັດທະນາໂຄງການໃດໜຶ່ງພາຍໃຕ້ກົດໝາຍຂອງ ສປປ ລາວ ແລະ ພາຍໃຕ້ບັນດາເງື່ອນໄຂສະເພາະຕາມສັນຍາ;
10. **ບົດບັນທຶກຄວາມເຂົ້າໃຈ** ໝາຍເຖິງ ເອກະສານບັນທຶກການຕົກລົງ ລະຫວ່າງ ນິຕິບຸກຄົນ ກັບ ອົງການທີ່ໄດ້ຮັບມອບໝາຍຂອງລັດຖະບານ ເພື່ອໃຫ້ສິດໃນການສຶກສາຄວາມເປັນໄປໄດ້ຂອງໂຄງການ;
11. **ສັນຍາການລົງທຶນຮ່ວມພາກລັດແລະ ພາກເອກະຊົນ (PPP Contract)** ໝາຍເຖິງ ສັນຍາຜູກພັນລະຫວ່າງພາກລັດ ແລະ ພາກເອກະຊົນ ເພື່ອພັດທະນາໂຄງການ ຫຼື ສະໜອງການບໍລິການແກ່ໂຄງການໃດໜຶ່ງ ເພື່ອຜົນປະໂຫຍດສັງຄົມ ພາຍໃຕ້ສັນຍາຮ່ວມລົງທຶນພາກລັດ-ພາກທຸລະກິດ;
12. **ພາຫະນະຮັບໃຊ້ການຜະລິດໂດຍກົງ** ໝາຍເຖິງກົນຈັກ ແລະ ພາຫະນະທີ່ນຳໃຊ້ໂດຍກົງເຂົ້າໃນການດຳເນີນກິດຈະການລົງທຶນຕາມການກຳນົດຂອງລັດຖະບານ;

13. **ການລົງທຶນທາງກົງ** ໝາຍເຖິງການນຳເອົາທຶນເຂົ້າດຳເນີນທຸລະກິດ ຊຶ່ງ ເຮັດໃຫ້ຜູ້ລົງທຶນກາຍເປັນເຈົ້າຂອງວິສາຫະກິດ, ຄຸ້ມຄອງບໍລິຫານ ຫລື ຂະຫຍາຍວິສາຫະກິດທີ່ກ່ຽວຂ້ອງ;
14. **ການອອກໄປລົງທຶນຢູ່ຕ່າງປະເທດຂອງຜູ້ລົງທຶນພາຍໃນ** ໝາຍເຖິງ ການນຳເອົາທຶນ ແລະ ຊັບສິນຂອງຜູ້ລົງທຶນພາຍໃນ ອອກໄປລົງທຶນຢູ່ຕ່າງປະເທດ ຢ່າງຖືກຕ້ອງຕາມກົດໝາຍ ໂດຍການສ້າງຕັ້ງເປັນນິຕິບຸກຄົນໃໝ່, ໂຮມເຂົ້າ, ຊື້ ແລະ/ຫຼື ຂະຫຍາຍກິດຈະການຂອງບໍລິສັດຕ່າງປະເທດທີ່ມີແລ້ວ;
15. **ເຂດເສດຖະກິດພິເສດ** ໝາຍເຖິງເຂດທີ່ລັດຖະບານກຳນົດ ເພື່ອພັດທະນາໃຫ້ເປັນເຂດຜະລິດເພື່ອສົ່ງອອກ, ເຂດອຸດສາຫະກຳ ແລະ ເຂດຜະລິດເຕັກໂນໂລຢີໃໝ່ , ເປັນບ່ອນດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດຊຶ່ງມີນະໂຍບາຍສົ່ງເສີມພິເສດ ແລະ ມີລະບົບຮັບປະກັນຄວາມສະຫງົບປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ;

## ມາດຕາ 4. (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມການລົງທຶນ

ລັດສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດດ້ວຍການວາງນະໂຍບາຍເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອຳນວຍຄວາມສະດວກຕ່າງໆ ເປັນຕົ້ນແມ່ນການກຳນົດນິຕິກຳກ່ຽວຂ້ອງ, ການສະໜອງຂໍ້ມູນຂ່າວສານທີ່ຈຳເປັນ, ການໃຫ້ນະໂຍບາຍດ້ານພາສີ-ອາກອນ, ດ້ານແຮງງານ, ການໃຫ້ສິດນຳໃຊ້ທີ່ດິນ, ສະໜອງການບໍລິການການລົງທຶນປະຕູດຽວ, ລວມທັງການຮັບຮູ້, ຮັບປະກັນປົກປ້ອງສິດ, ຜົນປະໂຫຍດ ແລະ ດ້ານຕ່າງໆຂອງຜູ້ລົງທຶນ ໂດຍສອດຄ່ອງຕາມກົດໝາຍ ຂອງ ສປປ ລາວ.

ລັດສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງການ, ກິດຈະການໃນຂອບເຂດທົ່ວປະເທດຍົກເວັ້ນເຂດ ແລະ ກິດຈະການທີ່ແຕະຕ້ອງເຖິງຄວາມສະຫງົບແລະ ຄວາມໝັ້ນຄົງຂອງຊາດ ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ສຸຂະພາບ ຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດໃນປັດຈຸບັນ ແລະ ຍາວນານ.

## ມາດຕາ 5. (ປັບປຸງ) ຫລັກການກ່ຽວກັບການສົ່ງເສີມການລົງທຶນ

ການສົ່ງເສີມການລົງທຶນຕ້ອງປະຕິບັດຕາມຫລັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການ, ເຂດແຄວ້ນ ແລະ ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຖືກຕ້ອງຕາມລະບຽບກົດໝາຍ;
2. ລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດໃນການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ;
3. ຮັບປະກັນໃຫ້ການລົງທຶນໄດ້ຮັບການບໍລິການທີ່ສະດວກ, ວ່ອງໄວ, ໂປ່ງໃສ,ຍຸຕິທຳ ແລະ ໃຫ້ຄວາມສະເໝີພາບຕໍ່ໜ້າກົດໝາຍດ້ວຍການບໍລິການການລົງທຶນປະຕູດຽວທີ່ມີປະສິດທິພາບ ແລະ ປະສິດທິຜົນ;

4. ວາງນະໂຍບາຍສົ່ງເສີມເພື່ອດຶງດູດການລົງທຶນ ທີ່ມີຄຸນນະພາບ ປະກອບສ່ວນເຂົ້າໃນການພັດທະນາ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ;
5. ຮັບຮູ້ ແລະ ຮັບປະກັນການປົກປ້ອງສິດ, ກໍາມະສິດ ແລະ ຜົນປະໂຫຍດດ້ານຕ່າງໆຂອງຜູ້ລົງທຶນທີ່ໄດ້ ຮັບຈາກລັດ ໂດຍສອດຄ່ອງຕາມກົດໝາຍ ຂອງ ສປປ ລາວ;
6. ຮັບປະກັນການປົກປັກຮັກສາ ແລະ ພັດທະນາເສດຖະກິດ-ສັງຄົມ ໄປພ້ອມກັບການປົກປັກຮັກສາ ວັດທະນະທໍາ, ສິ່ງແວດລ້ອມ, ທັງຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພໃນທົ່ວ ສັງຄົມ ແລະ ໃນເຂດການລົງທຶນ;

**ມາດຕາ 6. (ປັບປຸງ) ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ນໍາໃຊ້ສໍາລັບຜູ້ລົງທຶນ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພົວພັນກັບການ ລົງທຶນໂດຍທາງກົງ ຢູ່ ສປປ ລາວ ແລະ ອອກໄປລົງທຶນຢູ່ຕ່າງປະເທດ.

**ມາດຕາ 7. ການຮ່ວມມືສາກົນ**

ລັດສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ໃນວຽກງານ ສົ່ງເສີມການ ລົງທຶນດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຢີ ແລະ ປະສົບການດ້ານການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ການຕະຫລາດ, ການຄ້າ, ແຫລ່ງທຶນ, ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.

# ພາກທີ II
# ຮູບການການລົງທຶນ

**ມາດຕາ 8. (ປັບປຸງ) ຮູບການ ການລົງທຶນ**

ຜູ້ລົງທຶນສາມາດລົງທຶນທາງກົງຫລືທາງອ້ອມດ້ວຍຮູບການດັ່ງນີ້:

1. ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນຫລືຕ່າງປະເທດ;
2. ການລົງທຶນແບບຮຸ້ນສ່ວນລະຫວ່າງຜູ້ລົງທຶນພາຍໃນກັບຕ່າງປະເທດ;
3. ການລົງທຶນທຸລະກິດຮ່ວມຕາມສັນຍາ.
4. ການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ (PPP)

**ມາດຕາ 9 ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນຫລື ຕ່າງປະເທດ**

ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫລື ຕ່າງປະເທດ ແມ່ນການລົງທຶນຂອງຜູ້ລົງທຶນພາຍ ໃນ ຫລື ຕ່າງປະເທດຝ່າຍດຽວ ຊຶ່ງອາດຈະມີຜູ້ລົງທຶນຜູ້ດຽວ ຫລື ຫລາຍຜູ້ລົງທຶນໃນກິດຈະການ ຫລື ໂຄງການໃດໜຶ່ງຢູ່ ສປປ ລາວ.

**ມາດຕາ10. (ປັບປຸງ) ການລົງທຶນແບບຮຸ້ນສ່ວນລະຫວ່າງຜູ້ລົງທຶນພາຍໃນກັບຕ່າງປະເທດ**

ການລົງທຶນແບບຮຸ້ນສ່ວນລະຫວ່າງຜູ້ລົງທຶນພາຍໃນກັບຕ່າງປະເທດ ແມ່ນການລົງທຶນຮ່ວມລະຫວ່າງຜູ້ລົງທຶນພາຍໃນກັບຕ່າງປະເທດ ຊຶ່ງດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນໃໝ່ຂຶ້ນພາຍໃຕ້ກົດໝາຍຂອງສປປລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະຂອງຜູ້ລົງທຶນແບບຮຸ້ນສ່ວນແມ່ນກຳນົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບຂອງນິຕິບຸກຄົນໃໝ່ດັ່ງກ່າວ.

ສຳລັບຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນຮູບການດັ່ງກ່າວ ຕ້ອງປະກອບທຶນຢ່າງໜ້ອຍບໍ່ໃຫ້ຫລຸດສິບສ່ວນຮ້ອຍ (10%) ຂອງທຶນທັງໝົດໂດຍບໍ່ຂຶ້ນກັບຈຳນວນຂອງຜູ້ລົງທຶນຝ່າຍຕ່າງປະເທດ.

**ມາດຕາ 11. (ປັບປຸງ) ການລົງທຶນແບບທຸລະກິດຮ່ວມຕາມສັນຍາ**

ການລົງທຶນແບບທຸລະກິດຮ່ວມຕາມສັນຍາ ແມ່ນການດຳເນີນທຸລະກິດໃດໜຶ່ງຮ່ວມລະຫວ່າງນິຕິບຸກຄົນຕ່າງປະເທດກັບນິຕິບຸກຄົນພາຍໃນ ຢູ່ ສປປ ລາວ ໂດຍມີສັນຍາຮ່ວມທຸລະກິດນຳກັນຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວໃນໄລຍະເວລາອັນແນ່ນອນໃດໜຶ່ງ ແລະ ໂດຍ ບໍ່ຈຳເປັນຕ້ອງສ້າງຕັ້ງເປັນນິຕິບຸກຄົນໃໝ່ ຫລື ສາຂາຂຶ້ນຢູ່ ສປປ ລາວ. ສັນຍາດັ່ງກ່າວ ຕ້ອງກຳນົດສິດ, ພັນທະ ແລະ ຜົນປະໂຫຍດຂອງແຕ່ລະຝ່າຍ ຕໍ່ກັນ ແລະ ກັນ ແລະ ຕໍ່ລັດຖະບານຢ່າງຈະແຈ້ງ.

ນິຕິບຸກຄົນພາຍໃນທີ່ໄດ້ລົງນາມໃນສັນຍາຮ່ວມທຸລະກິດຕ້ອງແຈ້ງໃຫ້, ຂະແໜງການແຜນການ ແລະ ການລົງທຶນເພື່ອຮັບຮອງ ແລະ ຄຸ້ມຄອງຕາມລະບຽບການ.

ສັນຍາການລົງທຶນແບບທຸລະກິດຮ່ວມຕາມສັນຍາ ຕ້ອງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານຂອງ ສປປ ລາວ.

**ມາດຕາ 12. (ປັບປຸງ) ການກຳນົດທຶນຈົດທະບຽນ**

ທຶນຈົດທະບຽນຕ່ຳສຸດຂອງກິດຈະການສຳປະທານທີ່ຕິດພັນກັບການນຳໃຊ້ຊັບພະຍາກອນທຳມະຊາດ ບໍ່ໃຫ້ຫລຸດ ໜຶ່ງລ້ານ (1.000.000) ໂດລາສະຫະລັດ.

ທຶນຈົດທະບຽນຕ່ຳສຸດຂອງກິດຈະການສຳປະທານທີ່ບໍ່ຕິດພັນກັບການນຳໃຊ້ຊັບພະຍາກອນທຳມະຊາດບໍ່ໃຫ້ຫລຸດ ສາມແສນ (300.000) ໂດລາສະຫະລັດ.

ທຶນຈົດທະບຽນຕ່ຳສຸດຂອງກິດຈະການ ທີ່ມີການຄຸ້ມຄອງສະເພາະ ບໍ່ໃຫ້ຫລຸດ ສິບຫ້າພັນ (15.000) ໂດລາສະຫະລັດ.

ທຶນຈົດທະບຽນສຳລັບການລົງທຶນທົ່ວໄປ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການ ຂອງຂະແໜງການກ່ຽວຂ້ອງ.

ສຳລັບກິດຈະການທີ່ມີການກຳນົດທຶນຈົດທະບຽນໄວ້ໃນລະບຽບການຂອງຂະແໜງການກ່ຽວຂ້ອງແມ່ນໃຫ້ປະຕິບັດຕາມລະບຽບການນັ້ນ.

**ມາດຕາ 13. (ໃໝ່) ການຖອກທຶນຈົດທະບຽນ**

ທຶນຈົດທະບຽນສາມາດຖອກເປັນເງິນຕາ ແລະ /ຫລື ວັດຖຸ ໂດຍຜ່ານການຢັ້ງຢືນຈາກທະນາຄານ ແລະ/ຫລື ຂະແໜງການເງິນ ແລະ ໃຫ້ຖອກພາຍໃນ 90 ວັນ ນັບແຕ່ມື້ໄດ້ຮັບໃບອະນຸຍາດລົງທຶນຫລື ໃບທະບຽນວິສາຫະກິດເປັນຕົ້ນໄປ.

ການນຳເຂົ້າທຶນຈາກຕ່າງປະເທດຕ້ອງຜ່ານການຢັ້ງຢືນຈາກທະນາຄານແຫ່ງ ສປປ ລາວ.

**ມາດຕາ 14. (ໃໝ່) ການເພີ່ມທຶນຈົດທະບຽນ**

ການເພີ່ມທຶນຈົດທະບຽນຂອງນິຕິບຸກຄົນໃດໜຶ່ງຈະປະຕິບັດໄດ້ກໍ່ຕໍ່ເມື່ອໄດ້ນຳເຂົ້າ ຫລື ໄດ້ຖອກທຶນຈົດທະບຽນຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້.

# ພາກທີ III
# ກິດຈະການການລົງທຶນ

## ໝວດທີ 1
## ປະເພດກິດຈະການການລົງທຶນ

**ມາດຕາ 15. (ເກົ່າ 13) (ປັບປຸງ) ປະເພດກິດຈະການການລົງທຶນ**

ປະເພດກິດຈະການລົງທຶນປະກອບມີ:

1. ກິດຈະການທົ່ວໄປ;
2. ກິດຈະການສຳປະທານ;
3. ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ (PPP);
4. ກິດຈະການພັດທະນາເຂດເສດຖະກິດພິເສດ.

**ມາດຕາ 16. (ເກົ່າ 14) (ປັບປຸງ) ກິດຈະການທົ່ວໄປ**

ກິດຈະການທົ່ວໄປ ແມ່ນກິດຈະການລົງທຶນໃນຂະແໜງການທຸລະກິດທົ່ວໄປ ທີ່ ບໍ່ແມ່ນກິດຈະການສຳປະທານ ຊຶ່ງແບ່ງອອກເປັນ 3 ປະເພດ ດັ່ງນີ້:

1. ກິດຈະການທີ່ນອນໃນບັນຊີທຸລະກິດຄວບຄຸມ;
2. ກິດຈະການທີ່ບໍ່ນອນໃນບັນຊີທຸລະກິດຄວບຄຸມ;
3. ກິດຈະການທີ່ມີການຄຸ້ມຄອງສະເພາະ.

ການພິຈາລະນາການລົງທຶນໃນກິດຈະການທີ່ນອນໃນບັນຊີຄວບຄຸມ ແລະ ກິດຈະການທີ່ບໍ່ນອນໃນບັນຊີຄວບຄຸມ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ.

ການພິຈາລະນາການລົງທຶນໃນກິດຈະການທີ່ມີການຄຸ້ມຄອງສະເພາະ ໃຫ້ປະຕິບັດຕາມກົດໝາຍສະບັບນີ້.

**ມາດຕາ 17. (ເກົ່າ 15) (ປັບປຸງ) ກິດຈະການສໍາປະທານ**

ກິດຈະການສໍາປະທານ ແມ່ນກິດຈະການລົງທຶນທີ່ໄດ້ຮັບອະນຸຍາດຈາກລັດຖະບານໂດຍມີສັນຍາລະຫວ່າງ ນິຕິບຸກຄົນ ແລະ ລັດຖະບານຊຶ່ງແບ່ງອອກເປັນ 2 ປະເພດ ດັ່ງນີ້:

1. ກິດຈະການສໍາປະທານ ທີ່ຕິດພັນກັບການນໍາໃຊ້ຊັບພະຍາກອນທໍາມະຊາດ;
2. ກິດຈະການສໍາປະທານ ທີ່ບໍ່ຕິດພັນກັບການນໍາໃຊ້ຊັບພະຍາກອນທໍາມະຊາດ.

ລາຍລະອຽດຂອງປະເພດກິດຈະການສໍາປະທານ ໄດ້ກໍານົດໄວ້ໃນບັນຊີສະເພາະ.

ລັດຖະບານ ສາມາດເຂົ້າຖືຮຸ້ນໃນກິດຈະການສໍາປະທານຕາມແຕ່ລະກໍລະນີ ໂດຍສອດຄ່ອງຕາມລະບຽບການກ່ຽວຂ້ອງ.

**ມາດຕາ 18. (ໃໝ່) ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ**

ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ແມ່ນກິດຈະການຮ່ວມລົງທຶນລະຫວ່າງພາກລັດ ແລະ ພາກເອກະຊົນພາຍໃຕ້ສັນຍາການລົງທຶນຮ່ວມ ເພື່ອຈັດຕັ້ງປະຕິບັດໂຄງການ ຫຼື ສະໜອງການບໍລິການຊຶ່ງຖືກຄຸ້ມຄອງໂດຍກົດໝາຍສະບັບນີ້. ລັດຖະບານອອກລະບຽບການສະເພາະເພື່ອຄຸ້ມຄອງການລົງທຶນໃນຮູບແບບ ການຮ່ວມລົງທຶນລະຫວ່າງພາກລັດ ແລະ ພາກເອກະຊົນ.

**ມາດຕາ 19. (ເກົ່າ16) (ປັບປຸງ) ກິດຈະການພັດທະນາເຂດເສດຖະກິດພິເສດ**

ກິດຈະການພັດທະນາເຂດເສດຖະກິດພິເສດ ແມ່ນກິດຈະການລົງທຶນພັດທະນາເຂດໃດໜຶ່ງຕາມການຕົກລົງຂອງລັດຖະບານ ເພື່ອດໍາເນີນການກໍ່ສ້າງພື້ນຖານໂຄງລ່າງໃຫ້ຄົບຊຸດ, ຮອງຮັບໃຫ້ແກ່ການ ຫັນເປັນອຸດສາຫະກໍາ ແລະ ທັນສະໄໝ, ປະກອບສ່ວນເຮັດໃຫ້ເສດຖະກິດແຫ່ງ ຊາດເຕີບໃຫຍ່ຂະຫຍາຍຕົວເຂັ້ມແຂງ, ຍືນຍົງຕາມທິດການພັດທະນາແລະ ເຕີບໂຕແບບສີຂຽວ.

ການຄຸ້ມຄອງເຂດເສດຖະກິດພິເສດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍເຂດເສດຖະກິດພິເສດ.

## ໝວດທີ 2
## ການສະເໜີຂໍລົງທຶນ

**ມາດຕາ 20. (ເກົ່າ 17)(ປັບປຸງ) ການພິຈາລະນາການລົງທຶນ**

ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນຢູ່ ສປປ ລາວ ໃນກິດຈະການທີ່ມີການຄຸ້ມຄອງສະເພາະ, ກິດຈະການ ສໍາປະທານ, ການພັດທະນາເຂດເສດຖະກິດພິເສດ ແລະ ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ຕ້ອງຍື່ນສະເໜີຂໍອະນຸຍາດລົງທຶນຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຢູ່ຂະແໜງແຜນການ ແລະ ການລົງທຶນ.

ສໍາລັບ ຜູ້ລົງທຶນ ພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນໃນກິດຈະການທົ່ວໄປທີ່ນອນໃນບັນຊີຄວບຄຸມ ແລະ ບໍ່ຄວບຄຸມ ໃຫ້ຍື່ນສະເໜີຂໍຂຶ້ນທະບຽນວິສາຫະກິດ ຢູ່ຂະແໜງອຸດສາຫະກໍາ ແລະການຄ້າ ຕາມກົດໝາຍວ່າດ້ວຍວິສາຫະກິດ.

ພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນ ຫລື ໃບທະບຽນວິສາຫະກິດແລ້ວ ຈະດໍາເນີນທຸລະກິດໄດ້ ກໍຕໍ່ເມື່ອໄດ້ຮັບໃບທະບຽນອາກອນ ຫຼື ເລກປະຈໍາຕົວຜູ້ເສຍອາກອນ, ຕາປະທັບ ແລະ ໃບອະນຸຍາດດໍາເນີນກິດຈະການຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 21. (ໃໝ່) ໃບອະນຸຍາດລົງທຶນ**

ໃບອະນຸຍາດລົງທຶນ ແມ່ນເອກະສານຮັບຮອງການໄດ້ສິດລົງທຶນຢ່າງຖືກຕ້ອງຕາມກົດໝາຍ ແລະ ຖືເປັນເອກະສານຮັບຮອງການສ້າງຕັ້ງເປັນນິຕິບຸກຄົນ. ເນື້ອໃນພື້ນຖານຂອງໃບອະນຸຍາດລົງທຶນປະກອບດ້ວຍ: ຊື່ວິສາຫະກິດ, ທີ່ຕັ້ງສຳນັກງານ, ທີ່ຕັ້ງໂຄງການ, ກິດຈະການ, ທຶນທັງໝົດ, ທຶນຈົດທະບຽນ, ນະໂຍບາຍສົ່ງເສີມ, ຊື່ຜູ້ລົງທຶນ, ຮູບການລົງທຶນ ແລະ ອາຍຸການລົງທຶນ.

**ມາດຕາ 22. (ເກົ່າ20)(ປັບປຸງ) ອາຍຸການລົງທຶນ**

ການລົງທຶນໃນກິດຈະການທົ່ວໄປໃນບັນຊີຄວບຄຸມ ແລະ ບໍ່ຄວບຄຸມ ບໍ່ຈຳກັດອາຍຸການລົງທຶນ ເວັ້ນເສຍແຕ່ກິດຈະການລົງທຶນທີ່ໄດ້ກຳນົດອາຍຸການລົງທຶນໄວ້ໃນລະບຽບການສະເພາະຂອງຂະແໜງການທີ່ກ່ຽວຂ້ອງ.

ການລົງທຶນໃນກິດຈະການທີ່ມີການຄຸ້ມຄອງສະເພາະ ກຳນົດອາຍຸການລົງທຶນ 15 ປີ ແລະ ສາມາດຕໍ່ໄດ້ເທື່ອລະ 15 ປີ ໂດຍຜ່ານການຄົ້ນຄວ້າຕາມລະບຽບການ, ເວັ້ນເສຍແຕ່ກິດຈະການທີ່ໄດ້ກຳນົດອາຍຸການລົງທຶນໄວ້ໃນລະບຽບການສະເພາະຂອງຂະແໜງການທີ່ກ່ຽວຂ້ອງ.

ສຳລັບອາຍຸຂອງການລົງທຶນໃນກິດຈະການສຳປະທານ, ກິດຈະການພັດທະນາເຂດເສດຖະກິດພິເສດ ແລະ ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ ແມ່ນອີງຕາມອາຍຸທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ ແລະ ຕາມອາຍຸຂອງສັນຍາ.

## ໝວດທີ 3(ໃໝ່)
## ການລົງທຶນໃນກິດຈະການທີ່ມີການຄຸ້ມຄອງສະເພາະ

**ມາດຕາ 23. (ໃໝ່) ປະເພດກິດຈະການທີ່ມີການຄຸ້ມຂອງສະເພາະ**

ປະເພດກິດຈະການທີ່ມີການຄຸ້ມຄອງສະເພາະ ແມ່ນປະ ເພດທຸລະກິດທີ່ມີຄວາມອ່ອນໄຫວສູງ ຕ້ອງໄດ້ຜ່ານການຄົ້ນຄວ້າພິຈາລະນາຈາກຂະແໜງການກ່ຽວຂ້ອງກ່ອນອອກໃບອະນຸຍາດລົງທຶນ ເຊັ່ນ ຂົນສົ່ງ, ສະຖາບັນການເງິນ, ທະນາຄານທຸລະກິດ, ປະກັນໄພ, ສຶກສາ, ສາທາລະນະສຸກ, ໂຮງງານປຸງແຕ່ງໂລຫະ ແລະ ອະໂລຫະ, ການສ້າງຕັ້ງເຂດການຄ້າຊາຍແດນ, ເຂດພັດທະນາແຫລ່ງທ່ອງທ່ຽວ, ການສ້າງຕັ້ງເຂດອຸດສາຫະກຳຕ່າງໆ.

ສຳລັບບັນຊີລະອຽດຂອງປະເພດກິດຈະການ ທີ່ມີການຄຸ້ມຄອງສະເພາະ ໄດ້ກຳນົດໄວ້ໃນດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 24. (ໃໝ່) ການສະເໜີຂໍລົງທຶນ ແລະ ກຳນົດເວລາການພິຈາລະນາ**

ຜູ້ລົງທຶນທີ່ມີຈຸດປະສົງລົງທຶນໃນກິດຈະການທີ່ມີການຄຸ້ມຄອງສະເພາະ ຕ້ອງຍື່ນຄຳຮ້ອງຂໍລົງທຶນຜ່ານຫ້ອງການບໍລິການການລົງທຶນປະຕູດຽວ ຢູ່ ຂະແໜງການແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ ແລະ ອອກໃບອະນຸຍາດ.

ພາຍຫລັງກວດກາຄວາມຖືກຕ້ອງຂອງສຳນວນຄຳຮ້ອງຂໍລົງທຶນແລ້ວ ຂະແໜງແຜນການ ແລະ ການລົງທຶນ ຕ້ອງສົ່ງສຳນວນຄຳຮ້ອງຂໍລົງທຶນໃຫ້ຂະແໜງການກ່ຽວຂ້ອງຄົ້ນຄວ້າມີຄຳເຫັນ ພາຍໃນກຳນົດເວລາສິບຫ້າ (15) ວັນລັດຖະການນັບແຕ່ມື້ໄດ້ຮັບສຳນວນຄຳຮ້ອງຂໍລົງທຶນເປັນຕົ້ນໄປ.

**ມາດຕາ 25. (ໃໝ່) ຂັ້ນຂອງການພິຈາລະນາການສະເໜີຂໍລົງທຶນ**

ການພິຈາລະນາການສະເໜີຂໍລົງທຶນ ໃນກິດຈະການທີ່ມີການຄຸ້ມຄອງສະເພາະ ປະກອບມີ ຂັ້ນລັດຖະບານ, ກະຊວງ, ແຂວງ. ລາຍລະອຽດໄດ້ກຳນົດໄວ້ໃນ ດຳລັດວ່າດ້ວຍການຈັດປະຕິບັດກົດໝາຍສະບັບນີ້.

## ໝວດທີ 4 (ໃໝ່)
## ການອອກໄປລົງທຶນຢູ່ຕ່າງປະເທດຂອງຜູ້ລົງທຶນພາຍໃນ

**ມາດຕາ 26. (ໃໝ່) ການສະເໜີອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນພາຍໃນທີ່ມີຈຸດປະສົງອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງຍື່ນຄຳຮ້ອງຕໍ່ກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດ.

**ມາດຕາ 27. (ໃໝ່) ເງື່ອນໄຂການອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນພາຍໃນ ຈະອອກໄປລົງທຶນຢູ່ຕ່າງປະເທດ ຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1. ມີເປົ້າໝາຍໂຄງການລົງທຶນຢູ່ຕ່າງປະເທດ.
2. ໄດ້ປະຕິບັດພັນທະດ້ານການເງິນຄົບຖ້ວນ ຕໍ່ລັດຖະບານ ສປປ ລາວ ຖືກຕ້ອງຕາມກົດໝາຍ.
3. ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຫລັກຊັບ, ລະບຽບການຂອງທະນາຄານ ແຫ່ງ ສປປ ລາວ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.
4. ການອອກໄປລົງທຶນຢູ່ຕ່າງປະເທດຂອງລັດວິສາຫະກິດ ຕ້ອງໃຫ້ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 28. (ໃໝ່) ສິດ ແລະ ພັນທະຂອງຜູ້ລົງທຶນ ທີ່ອອກໄປລົງທຶນຢູ່ຕ່າງປະເທດ**

ຜູ້ລົງທຶນ ທີ່ອອກໄປລົງທຶນຢູ່ຕ່າງປະເທດມີສິດ ດັ່ງນີ້:

1 ນຳເງິນ ແລະ ຊັບສິນກັບຄືນປະເທດ ພາຍຫລັງທີ່ໄດ້ປະຕິບັດພັນທະຕາມກົດໝາຍ ແລະ ລະບຽບການຂອງປະເທດ ທີ່ຕົນລົງທຶນຢູ່;

2 ໄດ້ຮັບການອຳນວຍຄວາມສະດວກ ແລະ ນະໂຍບາຍຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

3 ຈ້າງແຮງງານລາວເພື່ອເຮັດວຽກຢູ່ໃນວິສາຫະກິດຂອງຕົນຢູ່ຕ່າງປະເທດ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຂອງ ສປປ ລາວ.

ຜູ້ລົງທຶນ ທີ່ອອກໄປລົງທຶນຢູ່ຕ່າງປະເທດ ມີພັນທະດັ່ງນີ້:

1. ປະຕິບັດຕາມກົດໝາຍ ແລະ ລະບຽບການ ຂອງປະເທດທີ່ຕົນໄປລົງທຶນ;
2. ນຳເອົາຜົນກຳໄລ ແລະ ລາຍຮັບອື່ນໆ ຈາກການດຳເນີນທຸລະກິດກັບຄືນປະເທດ;
3. ລາຍງານດ້ານການເງິນ ແລະ ການດຳເນີນທຸລະກິດຂອງຕົນຕໍ່ກະຊວງແຜນການແລະການລົງທຶນຂອງ ສປປລາວ
4. ພາຍຫລັງສິ້ນສຸດການລົງທຶນຢູ່ຕ່າງປະເທດ ຕ້ອງນຳທຶນ ແລະ ຊັບສິນທັງໝົດກັບຄືນປະເທດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ5
## ການລົງທຶນໃນກິດຈະການສຳປະທານແລະ ກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ

### ມາດຕາ 29. (ເກົ່າ21) ການສະເໜີຂໍລົງທຶນໃນກິດຈະການສຳປະທານ

ຜູ້ລົງທຶນທີ່ມີຈຸດປະສົງລົງທຶນໃນກິດຈະການສຳປະທານຕ້ອງຍື່ນຄຳຮ້ອງຂໍລົງທຶນ ຕໍ່ຫ້ອງ ການບໍລິການການລົງທຶນປະຕູດຽວ ຢູ່ ຂະແໜງການແຜນການ ແລະ ການລົງທຶນເພື່ອຄົ້ນຄວ້າແລ້ວນຳສະເໜີລັດຖະບານ ຫລື ອົງການປົກຄອງຂັ້ນແຂວງພິຈາລະນາ.

### ມາດຕາ 30. (ເກົ່າ22) ການຄັດເລືອກເອົາຜູ້ລົງທຶນໃນກິດຈະການສຳປະທານ

ຜູ້ສະເໜີລົງທຶນໃນກິດຈະການສຳປະທານ ຕ້ອງໄດ້ຜ່ານການຄັດເລືອກຕາມແຕ່ລະກໍລະນີດ້ວຍວິທີການຕ່າງໆ ເປັນຕົ້ນການປຽບທຽບ, ການປະມູນ ຫລື ການປະເມີນຜົນ ໂດຍຂະແໜງການແຜນການ ແລະ ການລົງທຶນ ໂດຍການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ. ການຄັດເລືອກເອົາຜູ້ລົງທຶນຕ້ອງຮັບປະກັນຄວາມໂປ່ງໃສ, ການເປີດເຜີຍ ແລະ ສາມາດກວດສອບໄດ້.

ວິທີການຄັດເລືອກເອົາຜູ້ລົງທຶນໃນກິດຈະການສຳປະທານໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ31. (ເກົ່າ23)(ປັບປຸງ) ການພິຈາລະນາການລົງທຶນໃນກິດຈະການສຳປະທານ

ຂະແໜງການແຜນການ ແລະ ການລົງທຶນພິຈາລະນາການລົງທຶນ ໃນກິດຈະການສຳປະທານຕາມຂັ້ນຕອນດັ່ງນີ້:

- ຄົ້ນຄວ້າ ແລະ ຕົກລົງທາງດ້ານຫລັກການກ່ຽວກັບການລົງທຶນໂດຍຮັບປະກັນຜົນປະໂຫຍດຂອງລັດ , ຜູ້ລົງທຶນ ແລະ ປະຊາຊົນ. ໃນກໍລະນີທີ່ມີການໂອນສິດນຳໃຊ້ທີ່ດິນຄືນໃຫ້ລັດນັ້ນ ອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງ ຕ້ອງຄິດໄລ່ຄ່າທົດແທນໃຫ້ຜູ້ລົງທຶນ ຫລື ປະຊາຊົນທີ່ໄດ້ຮັບຄວາມເສຍຫາຍຈາກການໂອນດັ່ງກ່າວຕາມລາຄາທ້ອງຕະຫລາດ;
- ແນະນຳໃຫ້ຜູ້ລົງທຶນກະກຽມບັນດາເອກະສານ ຕາມແບບພິມທີ່ໄດ້ກຳນົດໄວ້ເປັນຕົ້ນບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ເອກະສານບັນຊີພາຫະນະ,

ອຸປະກອນ ແລະ ວັດຖຸດິບຮັບໃຊ້ການຜະລິດໂດຍກົງທີ່ຈະສະເໜີຂໍຍົກເວັ້ນພາສີ-ອາກອນການນໍາເຂົ້າ ເພື່ອເປັນພື້ນຖານໃຫ້ແກ່ການຄົ້ນຄວ້າພິຈາລະນາອະນຸມັດ;

- ຂະແໜງການແຜນການ ແລະ ການລົງທຶນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນເຈົ້າການໃນການເຈລະຈາ ແລະ ການຮ່າງສັນຍາເບື້ອງຕົ້ນ;
- ນໍາເອົາຜົນຂອງການເຈລະຈາຂອງໂຄງການດັ່ງກ່າວ ເຂົ້າພິຈາລະນາໃນກອງປະຊຸມທີ່ຫ້ອງການບໍລິການການລົງທຶນປະຕູດຽວເປັນຜູ້ຈັດຂຶ້ນ;
- ນໍາສະເໜີຕໍ່ລັດຖະບານ ຫລື ອົງການປົກຄອງຂັ້ນແຂວງ ເພື່ອພິຈາລະນາຕົກລົງ ພ້ອມທັງແນະນໍາໃຫ້ຜູ້ລົງທຶນວາງເງິນຄໍ້າປະກັນໂຄງການຕາມລະບຽບການໂດຍອີງຕາມປະເພດ ແລະ ຂະໜາດຂອງການລົງທຶນ. ເງິນຄໍ້າປະກັນດັ່ງກ່າວຕ້ອງຖອກໄວ້ໃນບັນຊີຄັງເງິນແຫ່ງຊາດ ແລະ ຈະຖືກສົ່ງຄືນພາຍຫລັງທີ່ເຮັດສໍາເລັດບັນດາໜ້າວຽກທີ່ໄດ້ກໍານົດໄວ້ໃນບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ.

**ມາດຕາ 32. (ເກົ່າ25)(ປັບປຸງ) ການອອກໃບອະນຸຍາດລົງທຶນ ໃນກິດຈະການສໍາປະທານ**

ການອອກໃບອະນຸຍາດລົງທຶນໃນກິດຈະການສໍາປະທານ ແມ່ນການອອກເອກະສານຮັບຮອງສິດສໍາປະທານຂອງຜູ້ລົງທຶນ ໂດຍການຕົກລົງຂອງລັດຖະບານ ຫລື ອົງການປົກຄອງຂັ້ນແຂວງ ຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

**ມາດຕາ 33. (ເກົ່າ26)(ປັບປຸງ) ເນື້ອໃນຂອງສັນຍາສໍາປະທານ**

ສັນຍາສໍາປະທານ ສ້າງຂຶ້ນບົນພື້ນຖານການເຫັນດີເປັນເອກະພາບ ລະຫວ່າງ ຜູ້ລົງທຶນ ກັບ ລັດຖະບານ ຫລື ອົງການປົກຄອງຂັ້ນແຂວງ.

ສັນຍາສໍາປະທານ ຕ້ອງມີເນື້ອຕົ້ນຕໍ ເຊັ່ນ ເປົ້າໝາຍ, ມູນຄ່າ, ອາຍຸສັນຍາ, ບັນດາເງື່ອນໄຂ, ສິດ, ຜົນປະໂຫຍດ ແລະ ພັນທະຂອງຄູ່ສັນຍາ.

**ມາດຕາ 34. (ເກົ່າ27)(ປັບປຸງ) ການດັດແກ້ເນື້ອໃນຂອງສັນຍາສໍາປະທານ ແລະ ໃບອະນຸຍາດລົງທຶນ ໃນກິດຈະການສໍາປະທານ**

ເນື້ອໃນຂອງສັນຍາສໍາປະທານອາດຈະຖືກດັດແກ້, ປ່ຽນແປງ ຫລື ເພີ່ມເຕີມໄດ້ບົນພື້ນຖານການຕົກລົງເຫັນດີຂອງຄູ່ສັນຍາ. ຖ້າວ່າການດັດແກ້, ປ່ຽນແປງ ຫລື ເພີ່ມເຕີມນັ້ນ ຫາກບໍ່ແມ່ນບັນຫາທີ່ສໍາຄັນແມ່ນຂະແໜງການແຜນການ ແລະ ການລົງທຶນສົມທົບກັບຂະແໜງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂຕາມການສະເໜີຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ແລະ ລາຍງານໃຫ້ລັດຖະບານ ຫລື ອົງການປົກຄອງຂັ້ນແຂວງທີ່ກ່ຽວຂ້ອງຊາບ.

ເນື້ອໃນຂອງໃບອະນຸຍາດລົງທຶນສາມາດດັດແກ້, ປ່ຽນແປງ ຫລື ເພີ່ມເຕີມໄດ້ ບົນພື້ນຖານການພິຈາລະນາ ແລະ ເຫັນດີຂອງຂະແໜງແຜນການ ແລະ ການລົງທຶນ.

**ມາດຕາ 35. (ເກົ່າ28)(ປັບປຸງ) ອາຍຸການລົງທຶນໃນກິດຈະການສໍາປະທານ**

ອາຍຸການລົງທຶນໃນກິດຈະການສໍາປະທານ ແມ່ນອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂຂອງກິດຈະການສໍາປະທານ ຕາມລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ, ແຕ່ສູງສຸດບໍ່ໃຫ້ເກີນ ຫ້າສິບ (50) ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ຫລື ອົງການປົກຄອງຂັ້ນແຂວງບົນເງື່ອນໄຂຜູ້ລົງທຶນໄດ້ປະຕິບັດໂຄງການ ທີ່ນໍາເອົາຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ, ໄດ້ປະຕິບັດສັນຍາຢ່າງມີປະສິດທິຜົນ ແລະ ມີຜົນງານໃນການປະກອບສ່ວນພັດທະນາທ້ອງຖິ່ນ.

**ມາດຕາ 36. (ໃໝ່) ການຕໍ່ອາຍຸສັນຍາ**

ການຕໍ່ອາຍຸສັນຍາ, ບົດບັນທຶກຄວາມເຂົ້າໃຈ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຂອງຂະແໜງການກ່ຽວຂ້ອງ. ໃນກໍລະນີມີຄວາມຈໍາເປັນ, ລັດຖະບານອາດພິຈາລະນາໃຫ້ຕໍ່ອາຍຸສັນຍາ, ບົດບັນທຶກຄວາມເຂົ້າໃຈ ບໍ່ເກີນ 1 ຄັ້ງ ບົນພື້ນຖານຜູ້ລົງທຶນ ຕ້ອງຊົດເຊີຍຄ່າເສຍໂອກາດໃນການພັດທະນາໃຫ້ແກ່ລັດຖະບານ ຕາມລະບຽບການສະເພາະ

ສໍາລັບສັນຍາຊອກຄົ້ນ ແລະ ສໍາຫລວດແຮ່ທາດ, ສັນຍາພັດທະນາໂຄງການໄຟຟ້າແລະ ບົດບັນທຶກຄວາມເຂົ້າໃຈ ໃນຂະແໜງກະສິກໍາ ທີ່ໄດ້ປະຕິບັດສໍາເລັດໜ້າວຽກຕາມສັນຍາ ແລະ ບົດບັນທຶກຄວາມເຂົ້າໃຈ ທີ່ຢູ່ໃນໄລຍະກະກຽມເຂົ້າສູ່ສັນຍາສໍາປະທານແຕ່ອາຍຸໄດ້ສິ້ນສຸດກ່ອນມື້ເຊັນສັນຍາສໍາປະທານແມ່ນບໍ່ຈໍາເປັນຕ້ອງຕໍ່ອາຍຸອີກ ຖ້າເວລາທີ່ຕ້ອງການເພີ່ມເຕີມສໍາລັບກະກຽມນັ້ນ ບໍ່ເກີນ 3 ເດືອນ.

**ມາດຕາ 37. (ໃໝ່) ການມອບ, ໂອນ ສິດ ຕາມສັນຍຫລື ໂອນຮຸ້ນ**

ຜູ້ລົງທຶນທີ່ໄດ້ຮັບສິດຕາມສັນຍາພັດທະນາໂຄງການ, ສັນຍາສຶກສາສໍາຫລວດ ແລະ ສັນຍາສໍາປະທານ ບໍ່ສາມາດມອບ, ໂອນສິດຕາມສັນຍາ ຫລື ໂອນຮຸ້ນໄດ້ ເວັ້ນເສຍແຕ່ວ່າໄດ້ປະຕິບັດບັນດາເງື່ອນໄຂດັ່ງນີ້:

1. ໄດ້ລົງທຶນຕົວຈິງໃສ່ໂຄງການໄປແລ້ວ ຢ່າງໜ້ອຍບໍ່ຫລຸດ 30% ຂອງມູນຄ່າໂຄງການ ໂດຍຜ່ານການຢັ້ງຢືນຈາກຂະແໜງການກ່ຽວຂ້ອງ ຫລື ຜູ້ກວດສອບອິດສະຫລະ;
2. ໄດ້ປະຕິບັດພັນທະດ້ານການເງິນ ແລະ ພັນທະອື່ນໆຄົບຖ້ວນຕາມສັນຍາ, ກົດໝາຍ ແລະ ລະບຽບການ;
3. ບໍ່ໄດ້ຢູ່ໃນໄລຍະການໄກ່ເກ່ຍ, ຮ້ອງຟ້ອງ ຫລື ດໍາເນີນຄະດີ;
4. ບໍ່ຢູ່ໃນສະພາວະການພິຈາລະນາລົ້ມລະລາຍ ຫລື ຖືກສານຕັດສິນເປັນບຸກຄົນ ຫຼື ນິຕິບຸກຄົນ ລົ້ມລະລາຍ;
5. ຕ້ອງເສຍອາກອນຕາມກົດໝາຍວ່າດ້ວຍສ່ວຍສາອາກອນແລະ ເສຍຄ່າທໍານຽມການມອບ, ໂອນ ອັດຕາ 1% ຂອງມູນຄ່າສັບສິນທີ່ຖືກມອບ,ໂອນ;
6. ຕ້ອງນໍາໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ;
7. ຕ້ອງໄດ້ຮັບການຕົກລົງເຫັນດີຈາກລັດຖະບານ

**ມາດຕາ 38. (ໃໝ່) ການລົງທຶນໃນກິດຈະການລົງທຶນຮ່ວມພາກລັດ ແລະ ພາກເອກະຊົນ**

ການລົງທຶນໃນກິດຈະການຮ່ວມພາກລັດ ແລະ ພາກເອກະຊົນ ແມ່ນການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ ບົນພື້ນຖານສັນຍາລະຫວ່າງພາກລັດ ແລະ ເອກະຊົນເພື່ອພັດທະນາ

ໂຄງການ ຫຼື ສະໜອງການບໍລິການໃນ ໂຄງການໃດໜຶ່ງ ເພື່ອຜົນປະໂຫຍດຂອງລັດ ແລະ ສັງຄົມ ໂດຍຜ່ານຂະບວນການປະມູນທີ່ເປີດກວ້າງ ແລະ ໂປ່ງໃສ.

ສ່ວນຂັ້ນຕອນການສະເໜີຂໍລົງທຶນ ແລະການພິຈາລະນາອະນຸຍາດ ແມ່ນກຳນົດໄວ້ໃນດຳລັດວ່າດ້ວຍການລົງທຶນຮ່ວມລະຫວ່າງພາກລັດ ແລະ ພາກເອກະຊົນ.

## ໝວດທີ6

## ການລົງທຶນໃນກິດຈະການການພັດທະນາເຂດເສດຖະກິດພິເສດ

### ມາດຕາ 39. (ເກົ່າ34)(ປັບປຸງ) ຫລັກການສ້າງຕັ້ງເຂດເສດຖະກິດພິເສດ

ເຂດເສດຖະກິດພິເສດຕ້ອງສ້າງຕັ້ງຕາມຫລັກການຕົ້ນຕໍດັ່ງນີ້:

1. ກຳນົດແຈ້ງວັດຖຸປະສົງຂອງເສດຖະກິດພິເສດ;
2. ມີທີຕັ້ງທີ່ເໝາະສົມກັບວັດຖຸປະສົງ, ກຳນົດເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
3. ກຳນົດອາຍຸສຳປະທານເຂດທີ່ຊັດເຈນ;
4. ກຳນົດແຈ້ງຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ປະຊາຊົນ;
5. ກຳນົດນະໂຍບາຍສົ່ງເສີມທີ່ຈະແຈ້ງ;
6. ຜ່ານການປະເມີນຜົນທາງດ້ານເສດຖະກິດ-ເຕັກນິກ ແລະ ສິ່ງແວດລ້ອມ-ສັງຄົມ;
7. ຢູ່ພາຍໃຕ້ການຄຸ້ມຄອງຂອງລັດຖະບານ ຫລື ອົງການປົກຄອງຂັ້ນແຂວງ ແລະ ນອນ ຢູ່ໃນແຜນພັດທະນາຂອງລັດຖະບານ, ແຂວງ, ນະຄອນຫຼວງ;
8. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ແລະ ວັດທະນະທຳອັນດີງາມຂອງຊາດ ພາຍໃນເຂດຕາມແນວທາງການພັດທະນາແບບຍືນຍົງ ແລະ ເຕີບໂຕແບບສີຂຽວຂອງລັດຖະບານ.

### ມາດຕາ 40. (ເກົ່າ 35)(ປັບປຸງ) ຂັ້ນຕອນການສ້າງຕັ້ງ

ລັດຖະບານ ເປັນຜູ້ຕົກລົງກ່ຽວກັບການສ້າງຕັ້ງເຂດເສດຖະກິດພິເສດໃດໜຶ່ງ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ ບົນພື້ນຖານການຄົ້ນຄວ້າ ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດສັງຄົມຂອງລັດຖະບານ ທ້ອງຖິ່ນ ແລະ ທ່າແຮງໃນດ້ານຕ່າງໆຂອງເຂດນັ້ນ

ຜູ້ລົງທຶນທີ່ມີຈຸດປະສົງສ້າງຕັ້ງເຂດເສດຖະກິດພິເສດຕ້ອງຍື່ນຄຳຮ້ອງຕໍ່ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ ແລະ ນຳສະເໜີລັດຖະບານພິຈາລະນາອະນຸມັດ

ການພິຈາລະນາການລົງທຶນສ້າງຕັ້ງເຂດເສດຖະກິດພິເສດ ໃຫ້ປະຕິບັດຄ້າຍຄືກັນກັບການພິຈາລະນາການລົງທຶນໃນກິດຈະການສຳປະທານ

ສຳລັບການໃຫ້ນະໂຍບາຍສົ່ງເສີມການລົງທຶນ ໃນການສ້າງຕັ້ງ ເຂດເສດຖະກິດພິເສດປະຕິບັດຕາມກົດໝາຍວ່າດ້ວຍເຂດເສດຖະກິດພິເສດ, ສຳລັບ ການລົງທຶນ ເຂົ້າໃນເຂດ ເສດຖະກິດພິເສດແມ່ນປະຕິບັດຕາມກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 41. (ເກົ່າ43).(ປັບປຸງ) ການສະເໜີລົງທຶນໃນເຂດເສດຖະກິດພິເສດ**

ຜູ້ລົງທຶນທີ່ມີຈຸດປະສົງລົງທຶນໃນເຂດເສດຖະກິດພິເສດ ຕ້ອງສະເໜີຂໍອະນຸມັດຈາກ ອົງການປົກຄອງຂັ້ນແຂວງ ໂດຍຜ່ານຄະນະບໍລິຫານເຂດເສດຖະກິດພິເສດທີ່ກ່ຽວຂ້ອງເພື່ອພິຈາລະນາຕາມກົດໝາຍວ່າດ້ວຍເຂດເສດຖະກິດພິເສດແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ7

## ການບໍລິການການລົງທຶນປະຕູດຽວ

**ມາດຕາ 42. (ເກົ່າ44).(ປັບປຸງ) ການບໍລິການການລົງທຶນປະຕູດຽວ**

ການບໍລິການການລົງທຶນປະຕູດຽວ ແມ່ນການບໍລິການ ເພື່ອເອື້ອອຳນວຍຄວາມສະດວກດ້ານຂໍ້ມູນຂ່າວສານການລົງທຶນ, ຮັບຄຳຮ້ອງສະເໜີຂໍລົງທຶນ, ພິຈາລະນາຄົ້ນຄວ້າອະນຸຍາດຄຳຮ້ອງຂໍລົງທຶນໂດຍການປະສານງານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ແລ້ວລາຍງານລັດຖະບານ ຫລື ອົງການປົກຄອງຂັ້ນແຂວງ ເພື່ອພິຈາລະນາອະນຸຍາດ , ອຳນວຍຄວາມສະດວກທາງດ້ານວິຊາທຸລະກິດ, ບັດອະນຸຍາດພັກເຊົາ ສະໜອງການບໍລິການຫລັງການອະນຸຍາດລົງທຶນ ໃຫ້ແກ່ຜູ້ລົງທຶນທີ່ລົງທຶນຢູ່ ສປປ ລາວ ໂດຍແມ່ນຂະແໜງແຜນການ ແລະ ການລົງທຶນ ເປັນໃຈກາງໃນການຈັດຕັ້ງປະຕິບັດ.

**ມາດຕາ 43. (ເກົ່າ45)(ປັບປຸງ) ຫລັກການການບໍລິການການລົງທຶນປະຕູດຽວ**

ຫລັກການການບໍລິການການລົງທຶນປະຕູດຽວມີດັ່ງນີ້:

1. ໜ່ວຍງານບໍລິການປະຕູດຽວ ຂອງຂະແໜງ ແຜນການ ແລະ ການລົງທຶນ ເປັນສູນລວມການບໍລິການໃຫ້ແກ່ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ.
2. ການບໍລິການຕ້ອງປະຕິບັດໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ, ມີຄວາມກະທັດຮັດ, ວ່ອງໄວ, ໂປ່ງໃສ, ມີປະສິດທິພາບ, ປະສິດທິຜົນ, ປົດເຜີຍ ແລະ ສາມາດກວດສອບໄດ້;
3. ການເສຍຄ່າທຳນຽມ ແລະ ຄ່າບໍລິການ ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງ ສປປ ລາວ;
4. ການພິຈາລະນາການລົງທຶນ ຕ້ອງປະຕິບັດຕາມລະບຽບການ ແລະ ຂັ້ນຕອນທີ່ກຳນົດໄວ້ໃນກົດໝາຍສະບັບນີ້.

## ໝວດທີ8

## ຫ້ອງການຜູ້ຕາງໜ້າແລະສາຂາ

**ມາດຕາ 44. (ເກົ່າ47)(ປັບປຸງ) ຫ້ອງການຜູ້ຕາງໜ້າ**

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າຢູ່ ສປປ ລາວ ຕ້ອງສະເໜີຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂອງກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາ ແລະ

ອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ພາຍໃນກຳນົດເວລາຫ້າ (5) ວັນນັບແຕ່ວັນໄດ້ຮັບຄຳສະເໜີຂອງຜູ້ລົງທຶນເປັນຕົ້ນໄປ.

ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍ ສາມາດເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເປັນຕົ້ນການເກັບກຳຂໍ້ມູນທາງດ້ານການລົງທຶນ ໃຫ້ແກ່ບໍລິສັດແມ່ ເພື່ອເປັນພື້ນຖານໃນການພິຈາລະນາການລົງທຶນຢູ່ ສປປ ລາວ ແຕ່ຫາກບໍ່ມີສິດເຄື່ອນໄຫວດຳເນີນທຸລະກິດ.

ສຳລັບຫຼັກການໃນການສ້າງຕັ້ງ ແລະ ການກຳນົດອາຍຸຂອງຫ້ອງການຜູ້ຕາງໜ້າ ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 45. (ເກົ່າ48)(ປັບປຸງ) ສາຂາຂອງນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງສາຂາຂອງຕົນຢູ່ ສປປ ລາວ ໃນກິດຈະການຄຸ້ມຄອງສະເພາະຕ້ອງສະເໜີຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂອງກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະນາ ແລະ ອອກໃບອະນຸຍາດສ້າງຕັ້ງສາຂາພາຍໃນ ສິບຫ້າ (15) ວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. ໃບອະນຸຍາດດັ່ງກ່າວ ຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍ ຊຶ່ງສາມາດເຄື່ອນໄຫວດຳເນີນທຸລະກິດໄດ້ຕາມກິດຈະການເຄື່ອນໄຫວຂອງບໍລິສັດແມ່ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງສປປລາວ.

ລາຍລະອຽດຂອງບັນຊີກິດຈະການຄຸ້ມຄອງສະເພາະ ທີ່ສາມາດສ້າງຕັ້ງສາຂາ ໄດ້ກຳນົດໄວ້ໃນດຳລັດຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ນິຕິບຸກຄົນພາຍໃນທີ່ມີຈຸດປະສົງສ້າງຕັ້ງສາຂາຂອງຕົນ ຕ້ອງສະເໜີຕໍ່ຂະແໜງການທີ່ໄດ້ອອກອະນຸຍາດລົງທຶນເບື້ອງຕົ້ນ ເພື່ອພິຈາລະນາຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພາຍໃນ ເຈັດ (7) ວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

### ມາດຕາ 46. (ໃໝ່) ປະເພດສາຂາ

ສາຂາຂອງບໍລິສັດ ແບ່ງອອກເປັນສອງປະເພດ ດັ່ງນີ້:

1. ສາຂາບໍລິສັດພາຍໃນ (Inland Branches) ;
2. ສາຂາບໍລິສັດຕ່າງປະເທດ(Foreign Branches);

### ມາດຕາ 47. (ໃໝ່) ສາຂາບໍລິສັດພາຍໃນ

ສາຂາບໍລິສັດພາຍໃນ ແມ່ນສາຂາຂອງບໍລິສັດ ທີ່ຈົດທະບຽນພາຍໃຕ້ກົດໝາຍ ສປປ ລາວ , ເຊິ່ງແບ່ງອອກເປັນ 2 ປະເພດ ຄື:

1. ສາຂາຂຶ້ນກັບບໍລິສັດແມ່ (Dependent branch) ແມ່ນສາຂາທີ່ດຳເນີນງານພາຍໃຕ້ການຄວບຄຸມຂອງບໍລິສັດແມ່ ທາງດ້ານການວາງແຜນ, ການວາງນະໂຍບາຍ ແລະ ລະບຽບການຕ່າງໆ. ສາຂາປະເພດນີ້ ບໍ່ຖືບັນຊີຂອງຕົນ ແຕ່ຂຶ້ນກັບບໍລິສັດແມ່ໂດຍກົງ. ສາຂາດັ່ງກ່າວແບ່ງອອກເປັນ 2 ລັກສະນະ ຄື: ສາຂາເພື່ອສະໜອງການບໍລິການ ແລະສາຂາເພື່ອການຂາຍຍ່ອຍ

2. ສາຂາເອກະລາດ (Independent branch) ແມ່ນສາຂາທີ່ດຳເນີນທຸລະກິດຢ່າງເປັນເອກະລາດ ໂດຍບໍ່ຂຶ້ນກັບບໍລິສັດແມ່, ມີລະບົບບັນຊີ ແລະ ຄ່າໃຊ້ຈ່າຍເປັນຂອງຕົນເອງ , ສາມາດເປີດບັນຊີຢູ່ທະນາຄານທຸລະກິດໃດໜຶ່ງ ສາຂາປະເພດນີ້ສາມາດດຳເນີນການຊື້-ຂາຍ ກັບບໍລິສັດແມ່ ລວມທັງການຜະລິດສິນຄ້າດ້ວຍຕົນເອງຕາມການອະນຸຍາດຂອງບໍລິສັດແມ່.

**ມາດຕາ 48. (ໃໝ່) ສາຂາບໍລິສັດຕ່າງປະເທດ**

ສາຂາບໍລິສັດຕ່າງປະເທດ ແມ່ນສາຂາຂອງບໍລິສັດຂ້າມຊາ ດ ສາມາດ ດຳເນີນທຸລະກິດຢ່າງເປັນເອກະລາດ ໂດຍບໍ່ຂຶ້ນກັບບໍລິສັດແມ່, ມີລະບົບບັນຊີ ແລະ ຄ່າໃຊ້ຈ່າຍເປັນຂອງຕົນເອງ, ສາມາດເປີດບັນຊີຢູ່ທະນາຄານທຸລະກິດໃດໜຶ່ງ, ສາມາດສົ່ງທຶນ, ຊັບສິນ ແລະ ລາຍຮັບຂອງຕົນ ເປັນຕົ້ນ ກຳໄລຈາກການລົງທຶນ, ເງິນ ແລະ ຊັບສິນຕ່າງໆ ທີ່ເປັນກຳມະສິດຂອງຕົນ ຫລື ຂອງວິສາຫະກິດ ອອກໄປຕ່າງປະເທດໂດຍສອດຄ່ອງຕາມ ມາດຕາ 58 ຂອງກົດໝາຍສະບັບນີ້.

ບໍລິສັດຂ້າມຊາດ ສາມາດເປີດສາຂາຂອງຕົນຢູ່ ສປປ ລາວ ໃນ 2 ປະເພດ ດັ່ງທີ່ກຳນົດໄວ້ຢູ່ໃນມາດຕາ 48 ຂອງກົດໝາຍສະບັບນີ້ ແລະ ຕ້ອງສອດຄ່ອງກັບ ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

ບໍລິສັດພາຍໃນ ແລະ ຕ່າງປະເທດ ສາມາດສະເໜີຂໍສ້າງຕັ້ງສາຂາຂອງຕົນຢູ່ ສປປ ລາວ ໄດ້ໃນກິດຈະການ ທີ່ກຳນົດໄວ້ຢູ່ໃນບັນຊີກິດຈະການຄຸ້ມຄອງສະເພາະ.

# ພາກທີ IV
# ການສົ່ງເສີມ ແລະ ປົກປ້ອງການລົງທຶນ

## ໝວດທີ 1
## ການສົ່ງເສີມການລົງທຶນດ້ານພາສີອາກອນ

**ມາດຕາ 49. (ປັບປຸງ) ຂະແໜງການທີ່ໄດ້ຮັບນະໂຍບາຍສົ່ງເສີມ**

ການລົງທຶນຂອງພາກເອກະຊົນ ຢູ່ ສປປ ລາວ ໃນທຸກຂະໜາດການລົງທຶນ ໂດຍສະເພາະວິສາຫະກິດຂະໜາດນ້ອຍ ແລະ ກາງ ຈະໄດ້ຮັບນະໂຍບາຍສົ່ງເສີມການລົງທຶນ ໂດຍອີງໃສ່ຂດ ແລະ ຂະແໜງການລົງທຶນ.

ຂະແໜງການທີ່ໄດ້ຮັບນະໂຍບາຍສົ່ງເສີມມີ ຂະແໜງສຶກສາ, ສາທາ, ກະສິກຳ-ປ່າໄມ້, ການຜະລິດສະບຽງອາຫານ, ອຸດສາຫະກຳ-ຫັດຖະກຳປຸງແຕ່ງ, ອຸດສາຫະກຳ-ຫັດຖະກຳທັນສະໄໝ , ອຸດສາຫະກຳ ທີ່ນຳໃຊ້ເຕັກໂນໂລຊີໃນລະດັບສູງ ( Hi-Tech) ທີ່ເປັນມິດຕໍ່ສິ່ງແວດລ້ອມ, ອຸດສາຫະກຳທ່ອງທ່ຽວ, ຄົ້ນຄວ້າ ແລະ ພັດທະນາ ແລະ ການບໍລິການ ຊຶ່ງແມ່ນລັດຖະບານເປັນຜູ້ກຳນົດບັນຊີລະອຽດຂອງບັນດາກິດຈະການໃນຂະແໜງການດັ່ງກ່າວ ເປັນສາມລະດັບ ໂດຍອີງໃສ່ກິດຈະການບູລິມະສິດຂອງລັດຖະບານ,

ກິດຈະການທີ່ຕິດພັນກັບການແກ້ໄຂຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ການສ້າງພື້ນຖານໂຄງລ່າງ, ການພັດທະນາຊັບພະຍາກອນມະນຸດ, ການສ້າງວຽກເຮັດງານທຳແລະອື່ນໆ.

ການສົ່ງເສີມແບ່ງອອກເປັນສາມລະດັບດັ່ງນີ້:

- ລະດັບ 1: ແມ່ນບັນດາກິດຈະການທີ່ໄດ້ຮັບການສົ່ງເສີມສູງສຸດ;
- ລະດັບ 2: ແມ່ນບັນດາກິດຈະການທີ່ໄດ້ຮັບການສົ່ງເສີມປານກາງ;
- ລະດັບ 3: ແມ່ນບັນດາກິດຈະການທີ່ໄດ້ຮັບການສົ່ງເສີມຕ່ຳ.

ການລົງທຶນໃນບັນດາກິດຈະການສົ່ງເສີມຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ຈະໄດ້ຮັບນະໂຍບາຍຕ່າງໆ ເຊັ່ນ ດ້ານອາກອນກຳໄລ, ພາສີນຳເຂົ້າ ແລະ ສົ່ງອອກ ຕາມລະດັບຂອງແຕ່ລະຂະແໜງການ ທີ່ໄດ້ກຳນົດໄວ້ໃນດຳລັດຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 50. (ເກົ່າ) ເຂດສົ່ງເສີມການລົງທຶນ

ເຂດສົ່ງເສີມການລົງທຶນກຳນົດໂດຍອີງຕາມສະພາບພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ແລະ ພູມິປະເທດ ຊຶ່ງແບ່ງອອກເປັນສາມ (3) ເຂດດັ່ງນີ້:

ເຂດ 1: ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມທີ່ຍັງບໍ່ທັນອຳນວຍຄວາມສະດວກແກ່ການລົງທຶນ ແລະ ພູມິປະເທດ ສ່ວນໃຫຍ່ເປັນເຂດພູດອຍຫ່າງໄກສອກຫລີກ. ເຂດດັ່ງກ່າວຈະໄດ້ຮັບການສົ່ງເສີມການລົງທຶນໃນລະດັບສູງສຸດ;

ເຂດ 2: ເຂດທີ່ມີພື້ນຖານໂຄງລ່າເສດຖະກິດ-ສັງຄົມທີ່ສາມາດອຳນວຍຄວາມສະດວກແກ່ການລົງທຶນໄດ້ສ່ວນໃດສ່ວນໜຶ່ງ ແລະ ພູມິປະເທດບໍ່ທຸລະກັນດານເທົ່າກັບເຂດ 1. ເຂດດັ່ງກ່າວຈະໄດ້ຮັບການສົ່ງເສີມການລົງທຶນໃນລະດັບກາງ;

ເຂດ 3: ເຂດທີ່ມີພື້ນຖານໂຄງລ່າເສດຖະກິດ-ສັງຄົມທີ່ສາມາດອຳນວຍຄວາມສະດວກແກ່ການລົງທຶນໄດ້ດີ. ເຂດດັ່ງກ່າວຈະໄດ້ຮັບການສົ່ງເສີມການລົງທຶນໃນລະດັບຕ່ຳ.

ລາຍລະອຽດການກຳນົດເຂດສົ່ງເສີມການລົງທຶນ ໄດ້ລະບຸໄວ້ໃນດຳລັດຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 51. (ເກົ່າ)(ປັບປຸງ) ນະໂຍບາຍດ້ານອາກອນກຳໄລ

ນະໂຍບາຍດ້ານອາກອນກຳໄລປະຕິບັດດັ່ງນີ້:

1. ເຂດ 1:

- ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 1 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 8 ປີ;
- ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 2 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 6 ປີ;
- ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 3 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 4 ປີ;

2. ເຂດ 2:

- ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 1 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 5 ປີ;

– ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 2 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 3 ປີ;

– ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 3 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 1 ປີ;

3. ເຂດ 3:

– ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 1 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 3 ປີ;

– ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມລະດັບ 2 ຈະໄດ້ຮັບການຍົກເວັ້ນອາກອນກຳໄລ 1 ປີ;

ໄລຍະການຍົກເວັ້ນອາກອນກຳໄລ ແມ່ນໃຫ້ນັບແຕ່ວັນໄດ້ດຳເນີນທຸລະກິດເປັນຕົ້ນໄປ.

ສຳລັບກິດຈະການຜະລິດສິນຄ້າໃໝ່, ສ້າງເຕັກໂນໂລຊີໃໝ່, ການຄົ້ນຄວ້າ ແລະ ພັດທະນາ, ຂະແໜງສຶກສາ, ສາທາ, ກະສິກຳ-ປ່າໄມ້, ການຜະລິດສະບຽງອາຫານ, ອຸດສາຫະກຳ-ຫັດຖະກຳປຸງແຕ່ງທີ່ເປັນມູນເຊື້ອຂອງຊາດເປັນມິດຕໍ່ສິ່ງແວດລ້ອມ, ການຍົກເວັ້ນອາກອນກຳໄລ ແມ່ນໃຫ້ນັບແຕ່ວັນມີກຳໄລເປັນຕົ້ນໄປ. ຫລັງຈາກສິ້ນສຸດໄລຍະຍົກເວັ້ນອາກອນກຳໄລດັ່ງທີ່ກ່າວມາຂ້າງເທິງນັ້ນແລ້ວ ກິດຈະການດັ່ງກ່າວຕ້ອງໄດ້ເສຍພັນທະອາກອນກຳໄລຕາມກົດໝາຍວ່າດ້ວຍສ່ວຍສາອາກອນ.

ສຳລັບການລົງທຶນຂະຫຍາຍກິດຈະການ ກໍຈະໄດ້ຮັບນະໂຍບາຍອາກອນກຳໄລຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ເຊັ່ນກັນ

ສຳລັບການລົງທຶນໃນກິດຈະການຂຸດຄົ້ນແຮ່ທາດ ໃຫ້ເສຍອາກອນກຳໄລໃນອັດຕາຕ່ຳສຸດ 35% , ສຳລັບຂະແໜງພະລັງງານໄຟຟ້າແລະ ກິດຈະການປູກໄມ້ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ

**ມາດຕາ 52. (ເກົ່າ)(ປັບປຸງ) ນະໂຍບາຍດ້ານພາສີ-ອາກອນອື່ນ**

ຜູ້ລົງທຶນນອກຈາກໄດ້ຮັບນະໂຍບາຍດ້ານອາກອນກຳໄລແລ້ວ ຍັງຈະໄດ້ຮັບນະໂຍບາຍດ້ານພາສີ-ອາກອນອື່ນ ດັ່ງນີ້:

1. ໄດ້ຮັບການຍົກເວັ້ນພາສີນຳເຂົ້າວັດຖຸດິບ, ອຸປະກອນ ແລະ ພາຫະນະຮັບໃຊ້ການຜະລິດໂດຍກົງ, ສຳລັບການຍົກເວັ້ນອາກອນນຳເຂົ້າສິ່ງດັ່ງກ່າວ ທີ່ມີລັກສະນະສົ່ງເສີມນັ້ນ ໃຫ້ປະຕິບັດຕາມລະບຽບການສະເພາະ;
2. ໄດ້ຮັບການຍົກເວັ້ນພາສີສົ່ງອອກ ສຳລັບຜະລິດຕະພັນທົ່ວໄປ ເພື່ອສົ່ງອອກ. ສ່ວນການສົ່ງອອກຊັບພະຍາກອນທຳມະຊາດ, ຜະລິດຕະພັນຈາກຊັບພະຍາກອນທຳມະຊາດ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ສຳລັບການນຳເຂົ້ານ້ຳມັນເຊື້ອໄຟທຸກປະເພດ ແມ່ນບໍ່ໄດ້ຮັບການຍົກເວັ້ນດ້ານພາສີ-ອາກອນ;
3. ສາມາດຍົກຍອດເງິນຂາດທຶນປະຈຳປີ ໄປຫັກອອກໃນປີຖັດໄປ ຫາກມີການຂາດທຶນປະຈຳປີ ຊຶ່ງເຈົ້າໜ້າທີ່ສ່ວຍສາອາກອນ ໄດ້ກວດກາຢັ້ງຢືນແລ້ວ ພາຍໃນກຳນົດເວລາສາມປີ. ເມື່ອໝົດກຳນົດແລ້ວ ຍອດເງິນຂາດທຶນທີ່ຍັງເຫລືອ ຈະບໍ່ອະນຸຍາດໃຫ້ຫັກອອກຈາກກຳໄລຕໍ່ໄປອີກ.

**ມາດຕາ 53. (ເກົ່າ) ນະໂຍບາຍການເຂົ້າເຖິງແຫລ່ງທຶນ**

ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດສາມາດເຂົ້າເຖິງແຫລ່ງທຶນ ດ້ວຍການກູ້ຢືມເງິນນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນຢູ່ ສປປ ລາວ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ.

**ມາດຕາ 54. (ເກົ່າ)(ປັບປຸງ) ນະໂຍບາຍສົ່ງເສີມສະເພາະພິເສດ**

ນະໂຍບາຍສົ່ງເສີມສະເພາະພິເສດມີດັ່ງນີ້:

1. ການລົງທຶນສ້າງໂຮງໝໍ, ໂຮງຮຽນອະນຸບານ, ໂຮງຮຽນສາມັນສຶກສາ, ໂຮງຮຽນວິຊາຊີບ, ວິທະຍາໄລ, ມະຫາວິທະຍາໄລ, ສູນຄົ້ນຄວ້າ-ວິໄຈ, ກິດຈະການສາທາລະນຸປະໂພກ, ບາງກິດຈະການດ້ານສິ່ງແວດລ້ອມຈະໄດ້ຮັບນະໂຍບາຍຍົກເວັ້ນການເກັບຄ່າເຊົ່າຫລື ສຳປະທານທີ່ດິນຂອງລັດ ດັ່ງນີ້:
   - ເຂດ 1: ໄດ້ຮັບການຍົກເວັ້ນຄ່າເຊົ່າ ຫລື ສຳປະທານ 8 ປີ ແລະ ໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລເພີ່ມ 5 ປີ;
   - ເຂດ 2: ໄດ້ຮັບການຍົກເວັ້ນຄ່າເຊົ່າ ຫລື ສຳປະທານ 5 ປີ ແລະ ໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລເພີ່ມ 3 ປີ;
   - ເຂດ 3: ໄດ້ຮັບການຍົກເວັ້ນຄ່າເຊົ່າ ຫລື ສຳປະທານ 3 ປີ ແລະ ໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລເພີ່ມ 2 ປີ.
2. ວິສາຫະກິດລົງທຶນໃນກິດຈະການທົ່ວໄປ ທີ່ນຳໃຊ້ແຮງງານພາຍໃນນັບແຕ່ [ສາມຮ້ອຍ (300)] ຄົນຂຶ້ນໄປ ພາຍຫຼັງສິ້ນສຸດການປະຕິບັດນະໂຍບາຍສົ່ງເສີມດ້ານອາກອນກຳໄລຕາມມາດຕາ 52 ຂອງກົດໝາຍສະບັບນີ້ແລ້ວ ຍັງສາມາດຂໍຮັບນະໂຍບາຍຍົກເວັ້ນອາກອນກຳໄລໄດ້ຕື່ມອີກ[03 ] ປີ.

**ມາດຕາ 55. (ເກົ່າ)(ປັບປຸງ) ການຈັດຕັ້ງປະຕິບັດກ່ຽວກັບນະໂຍບາຍດ້ານພາສີອາກອນ**

ການໃຫ້ນະໂຍບາຍສົ່ງເສີມດ້ານພາສີ-ອາກອນ ຈະໄດ້ຖືກກຳນົດໄວ້ໃນໃບອະນຸຍາດລົງທຶນ ຫຼື ໃບຢັ້ງຢືນນະໂຍບາຍສົ່ງເສີມ

ການຈັດຕັ້ງປະຕິບັດກ່ຽວກັບນະໂຍບາຍດ້ານພາສີ-ອາກອນມີດັ່ງນີ້:

1. ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດການໃຫ້ນະໂຍບາຍສົ່ງເສີມດ້ານພາສີອາກອນຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດລົງທຶນ ຫຼື ໃບຢັ້ງຢືນນະໂຍບາຍສົ່ງເສີມ
2. ສຳລັບການຍົກເວັ້ນພາສີນຳເຂົ້າວັດຖຸດິບ ອຸປະກອນ ແລະ ພາຫະນະຮັບໃຊ້ການຜະລິດໂດຍກົງໃຫ້ ຂະແໜງແຜນການ ແລະ ການລົງທຶນ ສົມທົບຂະແໜງການກ່ຽວຂ້ອງ ພິຈາລະນາອະນຸມັດ ແລ້ວສົ່ງໃຫ້ຂະແໜງການເງິນກຳດຕາມຈັດຕັ້ງປະຕິບັດຕົວຈິງໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບຂອງ ສປປ ລາວ.

## ໝວດທີ2
## ການສົ່ງເສີມການລົງທຶນດ້ວຍນະໂຍບາຍດ້ານອື່ນໆ

**ມາດຕາ 56. (ເກົ່າ57) ການສົ່ງເສີມດ້ານຂໍ້ມູນຂ່າວສານ**

ເພື່ອຮັບປະກັນໃຫ້ຜູ້ລົງທຶນໄດ້ຮັບຂໍ້ມູນຂ່າວສານກ່ຽວກັບການລົງທຶນຢ່າງຄົບຖ້ວນ, ເອກະພາບ, ວ່ອງໄວ, ທັນການ ແລະ ສາມາດຕັດສິນໃຈລົງທຶນໄດ້ນັ້ນ ຕ້ອງສ້າງຂໍ້ມູນຂ່າວສານການລົງທຶນຢູ່ໃນຫ້ອງການບໍລິການການລົງທຶນປະຕູດຽວທີ່ກ່ຽວຂ້ອງ. ສູນຂໍ້ມູນຂ່າວສານການລົງທຶນເປັນຜູ້ເກັບກຳ ແລະ

ສັງລວມບັນດາຂໍ້ມູນກ່ຽວກັບການລົງທຶນ ເພື່ອສ້າງເຄືອຂ່າຍ, ສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານ ເປັນຕົ້ນ: ການໂຄສະນາຜ່ານລະບົບເວັບໄຊ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ອື່ນໆ ກ່ຽວກັບການລົງທຶນ ໃຫ້ຜູ້ທີ່ມີຄວາມສົນໃຈ, ສະຖານທູດ, ກົງສູນລາວ ຫລື ຫ້ອງການຜູ້ຕາງໜ້າທາງດ້ານການຄ້າລາວ ປະຈຳຢູ່ຕ່າງປະເທດ ເພື່ອສະໜອງໃຫ້ຜູ້ທີ່ຕ້ອງການມາລົງທຶນ.

**ມາດຕາ 57. (ເກົ່າ59)(ປັບປຸງ) ການເປີດກວ້າງນະໂຍບາຍສົ່ງເສີມ**

ນອກຈາກນະໂຍບາຍສົ່ງເສີມທີ່ໄດ້ກຳນົດໄວ້ໃນໝວດທີ 1 ແລະ ໝວດທີ 2 ຂອງພາກທີ IV ແລ້ວຖ້າເຫັນວ່າມີຄວາມຈຳເປັນຕ້ອງມີນະໂຍບາຍສົ່ງເສີມຕື່ມຕໍ່ບາງຂະແໜງການ, ເຂດເສດຖະກິດພິເສດໃດໜຶ່ງນັ້ນ ລັດຖະບານ ມີສິດ ນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ຫລື ຄະນະປະຈຳສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດ ບໍ່ເປີດກອງປະຊຸມເພື່ອພິຈາລະນາ ແລະ ຕົກລົງ.

## ໝວດທີ3
## ການປົກປ້ອງການລົງທຶນ

**ມາດຕາ 58. (ເກົ່າ60) ການປົກປ້ອງການລົງທຶນ**

ຜູ້ລົງທຶນ ລ້ວນແຕ່ໄດ້ຮັບສິດສະເໝີພາບໃນການລົງທຶນ, ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 59. (ເກົ່າ61)(ປັບປຸງ) ຮູບການປົກປ້ອງການລົງທຶນ**

ລັດຮັບຮູ້ ແລະ ປົກປ້ອງການລົງທຶນຂອງຜູ້ລົງທຶນຢ່າງເຕັມສ່ວນ ໂດຍບໍ່ເກັບເກນ, ຍຶດ ແລະ ໂອນມາເປັນຂອງລັດ ດ້ວຍວິທີການທາງດ້ານບໍລິຫານ.

ໃນກໍລະນີທີ່ລັດຖະບານ ມີຄວາມຈຳເປັນນຳໃຊ້ເພື່ອສາທາລະນະປະໂຫຍດຜູ້ລົງທຶນ ຈະໄດ້ຮັບຄ່າທົດແທນຄືນ ຕາມມູນຄ່າຕົວຈິງ ຕາມລາຄາຕະຫລາດໃນເວລາມອບໂອນ ແລະ ດ້ວຍວິທີການຊຳລະທີ່ຕົກລົງກັນ ໃນເວລາທີ່ເໝາະສົມ.

**ມາດຕາ 60. (ເກົ່າ62) ການປົກປ້ອງຊັບສິນທາງປັນຍາ**

ລັດຮັບຮູ້ ແລະ ປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນທີ່ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາຂອງ ສປປ ລາວ, ສັນຍາສາກົນ ຫລື ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 61. (ໃໝ່) ການບໍລິການຫຼັງການອອກອະນຸຍາດ**

ຂະແໜງ ແຜນການ ແລະ ການລົງທຶນ ແລະ ຂະແໜງ ການກ່ຽວຂ້ອງ ຕ້ອງ ສ້າງກົນໄກ ການຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດໂຄງການ ຫຼັງໄດ້ຮັບການອອກອະນຸຍາດລົງທຶນແລ້ວ ເພື່ອຮັບ

ຟັງ ແລະ ຊ່ວຍເຫຼືອເບື້ອງຕົ້ນແກ່ຜູ້ລົງທຶນ ໃນການແກ້ໄຂ ບັນຫາ ຫລື ຄຳ ຮ້ອງທຸກ ທີ່ ພົວພັນກັບການລົງທຶນຂອງເຂົາເຈົ້າ ເພື່ອ ສະກັດກັ້ນບໍ່ໃຫ້ເກີດມີຂໍ້ຂັດແຍ່ງທີ່ຮ້າຍແຮງ ທີ່ຈະນຳໄປສູ່ການຮ້ອງຟ້ອງ ແລະ ເຂົ້າສູ່ຂະບວນການຍຸຕິທຳ.

# ພາກທີ V
# ສິດແລະພັນທະຂອງຜູ້ລົງທຶນ

## ໝວດທີ 1
## ສິດຂອງຜູ້ລົງທຶນ

**ມາດຕາ 62. (ເກົ່າ64)(ປັບປຸງ) ສິດໃນການລົງທຶນ**

ສິດໃນການລົງທຶນຂອງຜູ້ລົງທຶນມີດັ່ງນີ້:

1. ລົງທຶນໃນທຸກຂະແໜງການ ແລະ ທຸກເຂດລົງທຶນ ທີ່ບໍ່ຫວງຫ້າມຕາມກົດໝາຍຂອງ ສປປ ລາວ;
2. ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບກົດ;
3. ຂໍສຳປະທານໂຄງການຈາກລັດຖະບານ ຫລື ອົງການປົກຄອງແຂວງ, ນະຄອນຫຼວງ ຕາມແຕ່ກໍລະນີ ເພື່ອພັດທະນາໂຄງການໃດໜຶ່ງ;
4. ຂໍສຳປະທານສ້າງຕັ້ງເຂດເສດຖະກິດພິເສດຈາກລັດຖະບານ;
5. ຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫລື ສາຂາຂອງຕົນຢູ່ ສປປ ລາວ;
6. ຂໍປ່ຽນວັດຖຸປະສົງ ຫລື ກິດຈະການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງມາຈາກການປ່ຽນແປງດ້ານນະໂຍບາຍ, ກົດໝາຍ ແລະ ລະບຽບການ;
7. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ;
8. ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳທີ່ໄດ້ມາຈາກການລົງທຶນຂອງຕົນ;
9. ໄດ້ຮັບການອຳນວຍຄວາມສະດວກ ຈາກລັດໃນດ້ານຕ່າງໆໃນການລົງທຶນຂອງຕົນ;
10. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫລື ການສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
11. ສຳລັບຜູ້ເຊົ່າ ຫລື ສຳປະທານທີ່ດິນ ມີສິດນຳໃຊ້ທີ່ດິນຕາມອາຍຸເຊົ່າ ຫລື ສຳປະທານ, ໃຫ້ສືບທອດສັນຍາເຊົ່າທີ່ດິນ ຕາມອາຍຸຂອງສັນຍາ ແລະ ອື່ນໆ ຕາມກົດໝາຍ;
12. ເປັນເຈົ້າກຳມະສິດໃນຕຶກ, ອາຄານ ຫລື ສິ່ງປຸກສ້າງໃນທີ່ດິນ ທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫລື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;

13. ເປີດບັນຊີເປັນເງິນກີບ ຫລື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ;
14. ຍື່ນຄໍາຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງໃນກໍລະນີທີ່ເຫັນວ່າຕົນຖືກລົບປະໂຫຍດໃນການລົງທຶນ;
15. ໄດ້ຮັບສິດ ແລະ ຜົນປະໂຫຍດອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ;

**ມາດຕາ 63. (ເກົ່າ 65)(ປັບປຸງ) ສິດໃນການຄຸ້ມຄອງ-ບໍລິຫານກິດຈະການການລົງທຶນຂອງຕົນ**

ສິດໃນການຄຸ້ມຄອງ-ບໍລິຫານກິດຈະການການລົງທຶນຂອງຕົນມີດັ່ງນີ້:

1. ວາງແຜນການໃນການລົງທຶນຂອງຕົນ;
2. ຈັດຫາ ແລະ ນໍາໃຊ້ວັດຖຸ, ອຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຊີຕ່າງໆ ເຂົ້າໃນການລົງທຶນຂອງຕົນ;
3. ເຂົ້າເຖິງຕະຫລາດພາຍໃນ ແລະ ຕ່າງປະເທດ;
4. ຄຸ້ມຄອງແຮງງານໃຫ້ມີຄວາມປອດໄພ ແລະ ມີຄວາມສະດວກໃນການເຄື່ອນໄຫວທຸລະກິດຂອງຕົນ;
5. ດໍາເນີນກອງປະຊຸມເພື່ອປຶກສາຫາລືກ່ຽວກັບການລົງທຶນຂອງຕົນ;
6. ມອບ, ໂອນ, ຖອນ ຫລື ເພີ່ມທຶນຂອງວິສາຫະກິດ ແລະ ມອບໝາຍໃຫ້ຜູ້ລົງທຶນອື່ນດໍາເນີນທຸລະກິດແທນ;
7. ສະເໜີຕໍ່ອົງການທີ່ກ່ຽວຂ້ອງເພື່ອພິຈາລະນາກ່ຽວກັບການ ຄວບ, ໂຈະ, ຍຸບເລີກ ຫລື ປ່ຽນຮູບແບບວິສາຫະກິດຂອງຕົນ;
8. ນໍາໃຊ້ສິດອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 64. (ເກົ່າ 66)(ປັບປຸງ) ສິດໃນການວ່າຈ້າງແຮງງານ**

ສິດໃນການວ່າຈ້າງແຮງງານມີດັ່ງນີ້:

1. ເຊັນສັນຍາວ່າຈ້າງແຮງງານກັບນັກວິຊາການ, ຜູ້ຊ່ຽວຊານ ເພື່ອເຂົ້າມາເຮັດວຽກໃນວິສາຫະກິດຂອງຕົນ. ໃນກໍລະນີກິດຈະການລົງທຶນ ຫາກມີຄວາມຈໍາເປັນນໍາເຂົ້າຜູ້ອອກແຮງງານດ້ານຮ່າງກາຍ ແລະ ມັນສະໝອງເກີນອັດຕາທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍແຮງງານ ຜູ້ລົງທຶນມີສິດນໍາສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຕາມຄວາມເໝາະສົມ;
2. ສັບຊ້ອນ, ຈັດວາງຜູ້ອອກແຮງງານ ເຂົ້າໃນຕໍາແໜ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງວິສາຫະກິດຕົນ;
3. ປະຕິບັດນະໂຍບາຍ ຫລື ມາດຕະການ ຕໍ່ຜູ້ອອກແຮງງານຢ່າງສະເໝີພາບ;
4. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍແຮງງານ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

**ມາດຕາ 65. (ເກົ່າ 67)(ປັບປຸງ) ສິດໃນການຢູ່ອາໄສສໍາລັບຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ມີສິດອາໄສຢູ່ດິນແດນ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ. ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ມີສິດອາໄສຢູ່ດິນແດນຂອງ ສປປ

ລາວ ຕາມສັນຍາວ່າຈ້າງແຮງງານ. ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ, ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ໄດ້ຮັບຄວາມສະດວກໃນການເຂົ້າ-ອອກ ສປປ ລາວ ລວມທັງການຂໍວີຊາເຂົ້າ-ອອກຫລາຍເທື່ອ ໜຶ່ງ (1) ປີ ສໍາລັບກິດຈະການທົ່ວໄປ ແລະ ຫ້າ (5) ປີ ສໍາລັບ ກິດຈະການສໍາປະທານ.

**ມາດຕາ 66. (ເກົ່າ 68) ສິດຂອງຜູ້ລົງທຶນຕ່າງປະເທດໃນການສົ່ງທຶນ ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດມີສິດສົ່ງທຶນ, ຊັບສິນ ແລະ ລາຍຮັບຂອງຕົນເປັນຕົ້ນກໍາໄລຈາກການລົງທຶນ ເງິນ ແລະ ຊັບສິນຕ່າງໆ ທີ່ເປັນກໍາມະສິດສ່ວນຕົວ ຫລື ຂອງວິສາຫະກິດອອກໄປຕ່າງປະເທດ ໂດຍຜ່ານທະນາຄານ ທີ່ຕັ້ງຢູ່ ສປປ ລາວ ແລະ ອີງການຈັດຕັ້ງລັດທີ່ກ່ຽວຂ້ອງ ພາຍຫລັງທີ່ໄດ້ປະຕິບັດພັນທະດ້ານພາສີ-ອາກອນ ແລະ ຄ່າທໍານຽມໃຫ້ລັດຢ່າງຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍຂອງ ສປປ ລາວ.

## ໝວດທີ 2
## ພັນທະຂອງຜູ້ລົງທຶນ

**ມາດຕາ 67 (ໃໝ່) ພັນທະຕໍ່ລັດ**

ຜູ້ລົງທຶນມີພັນທະຕໍ່ລັດ ດັ່ງນີ້:

1. ດໍາເນີນທຸລະກິດ ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
2. ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ຢ່າງຄົບຖ້ວນ ແລະ ທັນເວລາຕາມ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ, ໃນກໍລະນີຈໍາເປັນ ກໍສາມາດນໍາໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນຂອງ ສປປ ລາວ;
4. ໃຫ້ຄວາມຮ່ວມມື ແລະ ປະສານງານ ເປັນຢ່າງດີ ກັບອົງການປົກຄອງທ້ອງຖິ່ນໃນການເຄື່ອນໄຫວວຽກງານທຸລະກິດ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;
6. ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຢີ ໃຫ້ແກ່ຜູ້ອອກແຮງງານລາວ;
7. ປະກອບສ່ວນທາງດ້ານງົບປະມານໃນວຽກງານ ຕິດຕາມ, ກວດກາ ໂຄງການລົງທຶນຕາມດໍາລັດຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 68. (ໃໝ່) ພັນທະດ້ານສັງຄົມ**

ຜູ້ລົງທຶນມີພັນທະດ້ານສັງຄົມດັ່ງນີ້:

1. ປະຕິບັດລະບອບປະກັນໄພ ແລະ ປະກັນສັງຄົມ ຕໍ່ຜູ້ອອກແຮງງານ ໃນວິສາຫະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການ, ສົ່ງເສີມການນໍາໃຊ້ແຮງງານລາວ ໂດຍສະເພາະ ແຮງງານຍິງ ແລະ ຊົນເຜົ່າ;

2. ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນໃນວິສາຫະກິດຂອງຕົນ ໂດຍສະເພາະແມ່ນອົງການຈັດຕັ້ງກຳມະບານ;
3. ເຄົາລົບນັບຖື ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງທ້ອງຖິ່ນ;
4. ທົດແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກການນຳເນີນທຸລະກິດຂອງຕົນ;
5. ປະກອບສ່ວນຊຸກຍູ້ ສົ່ງເສີມທຸລະກິດ ພາຍໃນ, ການ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນໃນເຂດໂຄງການຂອງຕົນ;
6. ປະກອບສ່ວນທາງດ້ານງົບປະມານໃນວຽກງານພັດທະນາສັງຄົມ ຕາມດຳລັດຈັດຕັ້ງປະຕິບັດກົດໝາຍສະບັບນີ້.
7. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 69. (ໃໝ່) ພັນທະດ້ານສິ່ງແວດລ້ອມ**

1. ປະຕິບັດພັນທະດ້ານສິ່ງແວດລ້ອມ ຢ່າງເຄັ່ງຄັດ, ສົ່ງເສີມການພັດທະນາ ແລະ ເຕີບໂຕແບບສີຂຽວ, ຖືສຳຄັນ ການປົກປັກຮັກສາ ສະພາບແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
2. ໃນກໍລະນີ ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນມີພັນທະປະຕິບັດ ມາດຕະການທີ່ຈຳເປັນ ເພື່ອແກ້ໄຂສະພາບດັ່ງກ່າວ ຢ່າງທັນການ ຕາມກົດໝາຍ ແລະ ລະບຽບການ;
3. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມສັນຍາສາກົນ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;
4. ປະກອບສ່ວນທາງດ້ານງົບປະມານໃນວຽກງານສິ່ງແວດລ້ອມ ຕາມດຳລັດຈັດຕັ້ງປະຕິບັດກົດໝາຍສະບັບນີ້;
5. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 70. (ເກົ່າ 71)(ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນແລະການຈັດຕັ້ງມີການກະທຳດັ່ງນີ້:

1. ອະນຸມັດ, ດຳເນີນທຸລະກິດທີ່ຫວງຫ້າມ ຫລືບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ຂັດຂວາງການສົ່ງເສີມການລົງທຶນຢູ່ ສປປ ລາວ ໃນທຸກຮູບການ;
3. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

**ມາດຕາ 71. (ເກົ່າ72)(ປັບປຸງ) ຂໍ້ຫ້າມສຳລັບພະນັກງານ**

ຫ້າມພະນັກງານມີການກະທຳດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;

2. ສົມຮູ້ຮ່ວມຄິດ ຫລື ເອື້ອອຳນວຍຄວາມສະດວກໃຫ້ ຜູ້ລົງທຶນ ເພື່ອໃຫ້ໄດ້ມາເຊິ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
3. ຮັບສິນບົນຈາກຜູ້ລົງທຶນ ຫລື ຜູ້ທີ່ຫວັງຜົນປະໂຫຍດຈາກການລົງທຶນ;
4. ເປີດເຜີຍເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຂອງຜູ້ລົງທຶນ;
5. ແກ່ຍາວເວລາ ຫລື ກົດໜ່ວງການພິຈາລະນາເອກະສານຕ່າງໆ ຂອງຜູ້ລົງທຶນໂດຍບໍ່ມີເຫດຜົນ;
6. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 72. (ເກົ່າ 73)(ປັບປຸງ) ຂໍ້ຫ້າມສຳລັບຜູ້ລົງທຶນ**

ຫ້າມຜູ້ລົງທຶນມີການກະທຳດັ່ງນີ້:

1. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
2. ສົມຮູ້ຮ່ວມຄິດ ກັບເຈົ້າໜ້າທີ່ ແລະ ພະນັກງານລັດ ເພື່ອໃຫ້ໄດ້ມາເຊິ່ງຜົນປະໂຫຍດທີ່ຂັດກັບກົດໝາຍ ແລະ ລະບຽບການ;
3. ຫລົບຫລີກການປະຕິບັດພັນທະ, ເຊື່ອງອຳລາຍໄດ້, ຜົນກຳໄລລວມທັງຕົວເລກການເສຍພາສີ-ອາກອນ;
4. ໃສ່ຮ້າຍປ້າຍສີຫລືໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;
5. ກະທຳ ຫລື ເຄື່ອນໄຫວໃດໆ ທີ່ມີຜົນກະທົບຕໍ່ຮີດຄອງປະເພນີ ແລະ ວັດທະນະທຳຂອງຊາດ, ຄວາມສະຫງົບທາງສັງຄົມ ແລະ ປະເທດຊາດ;
6. ມີການກະທຳອື່ນທີ່ເປັນຂໍ້ຫ້າມຊຶ່ງໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີVII

# ການໂຈະ, ປ່ຽນແປງ, ຖອນ, ຍົກເລີກ ແລະ ສິ້ນສຸດການລົງທຶນ

**ມາດຕາ 73. (ເກົ່າ 74)(ປັບປຸງ) ການໂຈະການລົງທຶນ**

ການລົງທຶນຈະຖືກໂຈະໂດຍອົງການທີ່ອອກອະນຸຍາດ ດັ່ງນີ້:

1. ຕາມການສະເໜີຂອງຜູ້ລົງທຶນ;
2. ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຫລື ຕາມຄຳເຫັນຂອງອົງການທີ່ອອກອະນຸຍາດຍ້ອນທຸລະກິດ ມີຜົນກະທົບຢ່າງຮ້າຍແຮງຕໍ່ສະພາບແວດລ້ອມ, ເສດຖະກິດ-ສັງຄົມ ຫລື ດຳເນີນທຸລະກິດບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ.

ການໂຈະການລົງທຶນຕ້ອງມີກຳນົດເວລາອັນແນ່ນອນ ເພື່ອຊອກຫາວິທີແກ້ໄຂ ຫລື ປັບປຸງໃຫ້ຄືນສູ່ສະພາບປົກກະຕິ. ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ກິດຈະການນັ້ນ ກໍຈະຖືກຍຸບເລີກຕາມກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 74. (ເກົ່າ 75)(ປັບປຸງ) ການປ່ຽນແປງການລົງທຶນ**

ການລົງທຶນຈະຖືກປ່ຽນແປງດ້ວຍວິທີການຕ່າງໆ ເຊັ່ນ ການປ່ຽນວັດຖຸປະສົງໃນການດຳເນີນກິດຈະການ, ຜູ້ຖືຮຸ້ນ, ຜູ້ຕາງໜ້າທາງດ້ານກົດໝາຍ, ທຶນຈົດທະບຽນ ແລະ ອື່ນໆ ຕາມການສະເໜີຂອງຜູ້ລົງທຶນ ໂດຍແມ່ນອົງການທີ່ອອກອະນຸຍາດເປັນຜູ້ຄົ້ນຄວ້າພິຈາລະນາ.

**ມາດຕາ 75. (ເກົ່າ 76)(ປັບປຸງ) ການຖອນ ແລະ ການຍົກເລີກການລົງທຶນ**

ການລົງທຶນທີ່ບໍ່ມີການເຄື່ອນໄຫວຕາມບົດວິພາກເສດຖະກິດ-ເຕັກນິກບໍ່ເສຍພັນທະສອງ ( 2) ປີ ຊ້ອນ ຈະຖືກແຈ້ງເຕືອນ ໂດຍອົງການທີ່ອອກອະນຸຍາດ ສູງສຸດບໍ່ເກີນ ສອງ (2) ຄັ້ງ, ຖ້າບໍ່ມີການແກ້ໄຂ ແມ່ນຈະຖືກຖອນໃບອະນຸຍາດລົງທຶນ ຫລື ໃບທະບຽນວິສາຫະກິດ. ການຖອນໃບອະນຸຍາດ ຫລື ໃບທະບຽນວິສາຫະກິດ ຈະບໍ່ປົດປ່ອຍຜູ້ລົງທຶນອອກຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ລັດ.
ການລົງທຶນຈະຖືກຍົກເລີກໂດຍອົງການທີ່ອອກອະນຸຍາດ:

1. ຕາມການສະເໜີ ຂອງຄູ່ສັນຍາ;
2. ຕາມການສະເໜີຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ໃນກໍລະນີທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໃດຝ່າຍໜຶ່ງຕາມທີ່ໄດ້ກຳນົດໄວ້ໃນສັນຍາ, ກົດໝາຍ ແລະ ລະບຽບການ;
3. ເມື່ອມີການຖອນໃບອະນຸຍາດໃດໜຶ່ງ ເປັນຕົ້ນ ໃບອະນຸຍາດລົງທຶນ, ໃບ ທະບຽນວິສາຫະກິດຫຼື ໃບອະນຸຍາດຂອງຂະແໜງການກ່ຽວຂ້ອງ;
4. ເມື່ອມີຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານ;

ຂັ້ນຕອນການພິຈາລະນາການຍົກເລີກການລົງທຶນມີດັ່ງນີ້:

1. ອົງການທີ່ອອກອະນຸຍາດເປັນຜູ້ອອກແຈ້ງເຕືອນຜູ້ລົງທຶນໃນກໍລະນີທີ່ເຫັນວ່າ ມີການດຳເນີນທຸລະກິດຂັດກັບສັນຍາສຳປະທານ, ກົດໝາຍ ແລະ ລະບຽບການ, ມີຜົນກະທົບຢ່າງຮ້າຍແຮງຕໍ່ສິ່ງແວດລ້ອມ ເພື່ອໃຫ້ແກ້ໄຂ ແລະ ປັບປຸງພາຍໃນ ກຳນົດເວລາເກົ້າສິບ (90) ວັນ ນັບແຕ່ວັນອອກແຈ້ງການເຕືອນ ເປັນຕົ້ນໄປ ພ້ອມທັງເຮັດບົດບັນທຶກກັບຜູ້ລົງທຶນ;
2. ຖ້າຫາກຜູ້ລົງທຶນບໍ່ໄດ້ແກ້ໄຂ ແລະ ປັບປຸງພາຍໃນກຳນົດເວລາດັ່ງກ່າວແລ້ວ ອົງການທີອອກອະນຸຍາດກໍຈະອອກແຈ້ງເຕືອນເປັນຄັ້ງທີສອງ ເພື່ອໃຫ້ຜູ້ລົງທຶນຕ້ອງແກ້ໄຂ ແລະ ປັບປຸງພາຍໃນກຳນົດເວລາຫົກສິບ (60) ວັນ;
3. ຫລັງຈາກນັ້ນ ຖ້າຫາກຜູ້ລົງທຶນຍັງບໍ່ປະຕິບັດສຳເລັດພາຍໃນກຳນົດເວລາດັ່ງກ່າວ ອົງການທີ່ອອກອະນຸຍາດ ຈຶ່ງອອກແຈ້ງຍົກເລີກການດຳເນີນກິດຈະການຂອງຜູ້ລົງທຶນ ແລະ ແຈ້ງໃຫ້ສື່ມວນຊົນ ເພື່ອອອກຂ່າວ ພ້ອມທັງນຳໃຊ້ມາດຕະການທີ່ຈຳເປັນຕໍ່ຜູ້ລົງທຶນຕາມ ກົດໝາຍ ແລະ ລະບຽບການ.

**ມາດຕາ 76. (ເກົ່າ 77)(ປັບປຸງ) ການສິ້ນສຸດການລົງທຶນ**

ການລົງທຶນຈະສິ້ນສຸດລົງໃນກໍລະນີດັ່ງນີ້:

1. ໝົດອາຍຸການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນໃບອະນຸຍາດລົງທຶນ ຫລື ໂຄງການລົງທຶນໄດ້ປະຕິບັດສຳເລັດແລ້ວ;
2. ມີການຖອນ ຫລື ຍົກເລີກໃບອະນຸຍາດລົງທຶນ ຫລື ໃບທະບຽນວິສາຫະກິດ;

3. ມີການຄວບເຂົ້າກັນ ຫລື ແຍກຕົວອອກຈາກກັນຂອງກິດຈະການລົງທຶນ ເພື່ອສ້າງເປັນນິຕິບຸກຄົນອື່ນ;
4. ຍຸບເລີກຕາມການສະເໜີຂອງຜູ້ລົງທຶນ ຫລື ຄູ່ສັນຍາໂດຍມີການຢັ້ງຢືນຂອງຂະແໜງການທີ່ກ່ຽວຂ້ອງ;
5. ຍົກເລີກຕາມຄຳຕັດສິນຂອງສານ ຫລື ລົ້ມລະລາຍ.

# ພາກທີ VIII
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 77. (ເກົ່າ 78)(ປັບປຸງ) ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບດ້ານການລົງທຶນດຳເນີນດ້ວຍຮູບການດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມກັນ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍ ສູນ ຫລື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ ສປປ ລາວ ຫລື ຕ່າງປະເທດ;
4. ການຮ້ອງຟ້ອງຕໍ່ສານ.

**ມາດຕາ 78. (ເກົ່າ 79)(ປັບປຸງ) ການແກ້ໄຂດ້ວຍການປະນີປະນອມກັນ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງດ້ານການລົງທຶນ ຄູ່ກໍລະນີຕ້ອງດຳເນີນການແກ້ໄຂຂໍ້ຂັດແຍ່ງນຳກັນ ໂດຍສັນຕິວິທີ ແລະ ປະນີປະນອມ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

**ມາດຕາ 79. (ເກົ່າ 80)(ປັບປຸງ) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີເກີດຂໍ້ຂັດແຍ່ງທີ່ບໍ່ສາມາດຕົກລົງກັນ ຫລື ບໍ່ສາມາດແກ້ໄຂກັນໄດ້ໂດຍຄູ່ກໍລະນີ, ຝ່າຍໃດໜຶ່ງ ສາມາດສະເໜີຂໍ້ຂັດແຍ່ງຫາ ຂະແໜງການແຜນການ ແລະ ການລົງທຶນ, ຂະແໜງອຸດສາຫະກຳ ແລະ ການຄ້າ, ຄະນະບໍລິຫານງານເຂດເສດຖະກິດພິເສດ ຫລື ຂະແໜງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂທາງດ້ານບໍລິຫານຕາມພາລະບົດບາດຂອງຕົນ.

**ມາດຕາ 80. (ເກົ່າ 81)(ປັບປຸງ) ການແກ້ໄຂໂດຍສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຢູ່ ສປປ ລາວ ຫຼື ຕ່າງປະເທດ**

ໃນ ກໍລະນີຂໍ້ຂັດແຍ່ງບໍ່ສາມາດຖືກແກ້ໄຂດ້ວຍວິທີການທາງດ້ານບໍລິຫານໄດ້, ຄູ່ກໍລະນີສາມາດຮ້ອງຂໍຕໍ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີທີ່ເປັນຂໍ້ຂັດແຍ່ງລະຫວ່າງນັກລົງທຶນດ້ວຍກັນ ຄູ່ກໍລະນີສາມາດເລືອກທີ່ຈະສະເໜີແກ້ໄຂໂດຍ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ ຫລື ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຕາມການຕົກລົງຂອງຄູ່ກໍລະນີ ຫລື ຕາມທີ່ກໍານົດໄວ້ໃນສັນຍາ. ຄໍາຕັດສິນຂອງຄະນະໄກ່ເກ່ຍດັ່ງກ່າວ ຈະຖືກຮັບຮູ້ ແລະ ຈັດຕັ້ງປະຕິບັດໄດ້ໃນ ສປປ ລາວ ໂດຍອີງຕາມກົດໝາຍສາກົນ, ເຊິ່ງລວມທັງສົນທິສັນຍາວ່າດ້ວຍການຮັບຮູ້ ແລະ ການບັງຄັບປະຕິບັດຄໍາຕັດສິນຂອງຄະນະສານ ຫຼື ອົງການ ແກ້ໄຂໄກ່ເກ່ຍຂໍ້ຂັດແຍ່ງຂອງຕ່າງປະເທດ **(1958)** ທີ່ຕ້ອງໄດ້ຮັບການຈັດຕັ້ງປະຕິບັດໂດຍກົດໝາຍແກ້ໄຂໄກ່ເກ່ຍຂໍ້ຂັດແຍ່ງຂອງປະເທດ, ແຕ່ຕ້ອງຜ່ານການຮັບຮອງຕາມຂັ້ນຕອນຂອງຂະບວນການຍຸຕິທໍາຕາມກົດໝາຍຂອງ ສປປ ລາວ.

**ມາດຕາ 81. (ເກົ່າ82)(ປັບປຸງ) ການຮ້ອງຟ້ອງຕໍ່ສານ**

ໃນ ກໍລະນີຝ່າຍໃດຝ່າຍໜຶ່ງ ຫາກເຫັນວ່າຕົນຍັງບໍ່ໄດ້ຮັບຄວາມຍຸຕິທໍາ ຫລື ເສັຍປະໂຫຍດ ໃນການແກ້ໄຂຂໍ້ຂັດແຍ່ງໂດຍຜ່ານຂະບວນການໃດໜຶ່ງທີ່ກໍານົດໄວ້ໃນມາດຕາ 78, ມາດຕາ 79 ແລະ ມາດຕາ 80 ຂອງກົດໝາຍສະບັບນີ້ ຝ່າຍດັ່ງກ່າວ ສາມາດຮ້ອງຟ້ອງຕໍ່ສານ ພາຍໃນ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ.

ສໍາລັບຂໍ້ຂັດແຍ່ງຂອງການລົງທຶນ ທີ່ໄດ້ມີສັນຍາກັບລັດ ໃຫ້ປະຕິບັດຕາມວິທີການແກ້ໄຂຂໍ້ຂັດແຍ່ງທີ່ໄດ້ກໍານົດໄວ້ໃນສັນຍາ.

# ພາກທີ IX
# ການຄຸ້ມຄອງ ແລະ ຕິດຕາມ, ກວດກາ

## ໝວດທີ 1
## ການຄຸ້ມຄອງ

**ມາດຕາ 82. (ໃໝ່) ອົງການຄຸ້ມຄອງ**

ລັດຖະບານເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການຄຸ້ມຄອງ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຕາມພາລະບົດບາດຂອງຕົນ.

ອົງການຄຸ້ມຄອງການລົງທຶນປະກອບດ້ວຍ:

1. ຂະແໜງການແຜນການແລະການລົງທຶນ;
2. ຂະແໜງການອຸດສາຫະກໍາແລະການຄ້າ;
3. ອົງການປົກຄອງທ້ອງຖິ່ນ.

**ມາດຕາ 83. (ໃໝ່) ສິດ ແລະ ໜ້າທີ່ຂອງກະຊວງແຜນການ ແລະ ການລົງທຶນ**

ກະຊວງແຜນການ ແລະ ການລົງທຶນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານ ໃນວຽກງານສົ່ງເສີມການລົງທຶນ, ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນ, ສະຫລຸບ, ສັງລວມ, ຕີລາຄາ, ລາຍງານວຽກງານສົ່ງເສີມການລົງທຶນໃຫ້ລັດຖະບານ;
2. ໂຄສະນາ, ເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບໂຄງການ ຫລື ກິດຈະການທຸລະກິດການລົງທຶນ ເພື່ອດຶງດູດການລົງທຶນ;
3. ແນະນຳ, ຕິດຕາມ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ແລະ ວຽກງານການ ສົ່ງເສີມການລົງທຶນ, ລວມທັງມີ ຄວາມຮັບຜິດຊອບໂດຍກົງໃນການຕິດຕາມ, ກວດກາ ຢ່າງເປັນປົກກະຕິບັນດາໂຄງການລົງທຶນທີ່ໄດ້ຮັບອະນຸຍາດໃນຂອບເຂດທົ່ວປະເທດ ໂດຍການປະສານສົມທົບ ກັບທ້ອງຖິ່ນ;
4. ຈັດຕັ້ງປະຕິບັດວຽກງານປະຕູດຽວ ໃນການສົ່ງເສີມການລົງທຶນໃຫ້ມີປະສິດທິພາບ, ປະສິດທິຜົນ;
5. ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານໃນວຽກງານສົ່ງເສີມການລົງທຶນ;
6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານການລົງທຶນ;
7. ຊຸກຍູ້, ສົ່ງເສີມ ການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບອະນຸຍາດແລ້ວໃຫ້ມີປະສິດທິພາບ, ປະສິດທິຜົນ;
8. ໄກ່ເກ່ຍ ແລະ ແກ້ໄຂ ເບື້ອງຕົ້ນບັນຫາທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນໃນຂອບເຂດທົ່ວປະເທດ ຕາມພາລະບົດບາດຂອງຕົນ;
9. ຄົ້ນຄວ້າພິຈາລະນາ ອອກໃບອະນຸຍາດລົງທຶນ, ໂຈະ, ຖອນ, ຍົກເລີກໃບອະນຸຍາດລົງທຶນຫລືສັນຍາທີ່ຕົນອອກອະນຸຍາດ ຫລື ເຊັນສັນຍາ ຕາມພາລະບົດບາດ ໂດຍການເຫັນດີຂອງລັດຖະບານ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 84. (ໃໝ່) ສິດ ແລະ ໜ້າທີ່ຂອງພະແນກແຜນການ ແລະ ການລົງທຶນແຂວງນະຄອນຫລວງ**

ພະແນກແຜນການ ແລະ ການລົງທຶນ ຂັ້ນແຂວງ, ນະຄອນຫລວງ ຮັບຜິດຊອບ:

1. ເປັນເສນາທິການໃຫ້ອົງການປົກຄອງ ແລະ ຄະນະສົ່ງເສີມການລົງທຶນຂັ້ນແຂວງ, ນະຄອນຫລວງ ໃນວຽກງານສົ່ງເສີມການລົງທຶນ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍກ່ຽວກັບວຽກງານສົ່ງເສີມການລົງທຶນ;
2. ສະຫລຸບ, ສັງລວມ, ຕີລາຄາ, ລາຍງານວຽກງານສົ່ງເສີມການລົງທຶນໃຫ້ອົງການປົກຄອງ ແລະ ຄະນະສົ່ງເສີມການລົງທຶນ ຂັ້ນແຂວງ, ນະຄອນຫລວງ ແລະ ສູນກາງ;
3. ໂຄສະນາ, ເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານການດຶງດູດການລົງທຶນ;

4. ແນະນຳ, ຕິດຕາມ ແລະ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ແລະ ວຽກງານການສົ່ງເສີມການລົງທຶນ;
5. ຈັດຕັ້ງປະຕິບັດວຽກງານປະຕູດຽວ ໃນການສົ່ງເສີມການລົງທຶນໃຫ້ມີປະສິດທິພາບ, ປະສິດທິຜົນ;
6. ກໍ່ສ້າງ, ບຳລຸງ, ຍົກລະດັບພະນັກງານ ໃນວຽກງານສົ່ງເສີມການລົງທຶນ;
7. ພົວພັນ ແລະ ຮ່ວມມືກັບຕ່າງປະເທດກ່ຽວກັບວຽກງານການລົງທຶນ;
8. ຊຸກຍູ້, ສົ່ງເສີມ ການຈັດຕັ້ງປະຕິບັດໂຄງການທີ່ຂັ້ນສູນກາງ ແລະ ທ້ອງຖິ່ນອອກອະນຸຍາດໃຫ້ມີປະສິດທິພາບ, ປະສິດທິຜົນ;
9. ໄກ່ເກ່ຍ ແລະ ແກ້ໄຂ ເບື້ອງຕົ້ນ ບັນຫາທີ່ເກີດຂຶ້ນໃນບັນດາໂຄງການລົງທຶນໃນແຂວງ ຕາມພາລະບົດບາດຂອງຕົນ;
10. ມີຄວາມຮັບຜິດຊອບໂດຍກົງໃນການຕິດຕາມ, ກວດກາ ຢ່າງໃກ້ສິດ ແລະ ເປັນປົກກະຕິບັນດາໂຄງການລົງທຶນ ທີ່ໄດ້ຮັບອະນຸຍາດຈາກສູນກາງ ແລະ ທ້ອງຖິ່ນທີ່ຕັ້ງຢູ່ໃນແຂວງ, ນະຄອນຂອງຕົນ;
11. ຄົ້ນຄວ້າພິຈາລະນາ ອອກໃບອະນຸຍາດລົງທຶນ, ໂຈະ, ຖອນ, ຍົກເລີກໃບອະນຸຍາດລົງທຶນ ຫລື ສັນຍາທີ່ຕົນອອກອະນຸຍາດ ຫລື ເຊັນສັນຍາ ຕາມພາລະບົດບາດໂດຍການເຫັນດີຂອງອົງການປົກຄອງຂັ້ນແຂວງ, ນະຄອນ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 85. (ໃໝ່) ສິດແລະໜ້າທີ່ຂອງຫ້ອງການແຜນການແລະການລົງທຶນເມືອງ ເທດສະບານ, ນະຄອນ**

ຫ້ອງການແຜນການແລະການລົງທຶນເມືອງ, ເທດສະບານ, ນະຄອນ ມີສິດແລະໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ, ລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນໃນທ້ອງຖິ່ນຂອງຕົນ;
2. ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍກ່ຽວກັບວຽກງານສົ່ງເສີມການລົງທຶນ, ສະໜອງຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນຕາມຄວາມຮັບຜິດຊອບຂອງຕົນ;
3. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນເມືອງ, ເທດສະບານຂອງຕົນໃນການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບວຽກງານສົ່ງເສີມການລົງທຶນ;
4. ສ້າງໂຄງການ ຫລື ກິດຈະການຮຽກການລົງທຶນ ຕາມຄວາມຮັບຜິດຊອບຂອງຕົນ ແລ້ວສະເໜີຂັ້ນເທິງທີ່ກ່ຽວຂ້ອງພິຈາລະນາ;
5. ເກັບກຳສະຖິຕິ, ຂໍ້ມູນ ຂອງໂຄງການລົງທຶນຢູ່ໃນເມືອງຂອງຕົນ;
6. ຊຸກຍູ້, ສົ່ງເສີມ, ໄກ່ເກ່ຍ ແລະ ແກ້ໄຂເບື້ອງຕົ້ນ ກ່ຽວກັບ ບັນຫາທີ່ເກີດຂຶ້ນໃນບັນດາໂຄງການລົງທຶນໃນເມືອງ, ເທດສະບານ ຕາມພາລະບົດບາດຂອງຕົນ;
7. ສະຫລຸບ, ລາຍງານວຽກງານການລົງທຶນຕໍ່ຂັ້ນເທິງຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 86. (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການກ່ຽວຂ້ອງ ຂັ້ນສູນກາງ**

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ ເພື່ອສົ່ງເສີມການລົງທຶນພາກເອກະຊົນ ຕາມຂະແໜງການຂອງຕົນ;
2. ເປັນເຈົ້າການປະສານງານ ກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມກວດກາ ໂຄງການລົງທຶນ ຂອງພາກເອກະຊົນ ຕາມຂະແໜງການຂອງຕົນ;
3. ຄົ້ນຄວ້າພິຈາລະນາ ການອອກໃບອະນຸຍາດ, ໂຈະ, ຖອນ, ຍົກເລີກຕາມຂະແໜງການຂອງຕົນ;
4. ສະຫລຸບ, ສັງລວມ, ຕີລາຄາ, ລາຍງານວຽກງານສົ່ງເສີມການລົງທຶນໃຫ້ຂະແໜງແຜນການ ແລະ ການລົງທຶນ ເພື່ອລາຍງານລັດຖະບານ;
5. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 87. (ໃໝ່) ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ**

1. ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ ເພື່ອສົ່ງເສີມການລົງທຶນພາກເອກະຊົນ ຕາມຂະແໜງການຂອງຕົນ;
2. ເປັນເຈົ້າການປະສານງານ ກັບຂະແໜງການທີ່ກ່ຽວຂ້ອງ ໃນການສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມກວດກາ ໂຄງການລົງທຶນ ຂອງພາກເອກະຊົນ ຕາມຂະແໜງການຂອງຕົນ;
3. ຄົ້ນຄວ້າພິຈາລະນາ ການອອກໃບອະນຸຍາດ , ໂຈະ, ຖອນ, ຍົກເລີກຕາມພາລະບົບບາດ ໃນຂະແໜງການຂອງຕົນ ໂດຍການເຫັນດີຂອງອົງການປົກຄອງຂັ້ນທ້ອງຖິ່ນ;
4. ສະຫລຸບ, ສັງລວມ, ຕີລາຄາ, ລາຍງານວຽກງານສົ່ງເສີມການລົງທຶນໃຫ້ຂະແໜງແຜນການ ແລະ ການລົງທຶນ ເພື່ອລາຍງານອົງການປົກຄອງຂັ້ນທ້ອງຖິ່ນ ແລະ ສູນກາງ;
5. ປະຕິບັດສິດແລະໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ການກວດກາ

**ມາດຕາ 88. (ເກົ່າ 92)(ປັບປຸງ) ອົງການກວດກາການລົງທຶນ**

ຂະແໜງ ແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຕິດຕາມກວດກາໂຄງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 83, ມາດຕາ 84, ມາດຕາ 85 ຂອງກົດໝາຍສະບັບນີ້.

ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການກ່ຽວຂ້ອງ ຄຸ້ມຄອງ ແລະ ກວດກາ ຕາມພາລະບົດບາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 86, ມາດຕາ 87 ຂອງກົດໝາຍສະບັບນີ້

**ມາດຕາ 89. (ເກົ່າ 93) ເນື້ອໃນການກວດກາ**

ທຸກການເຄື່ອນໄຫວຂອງບັນດາກິດຈະການການລົງທຶນລ້ວນແຕ່ໄດ້ຮັບການຄຸ້ມຄອງ, ຕິດຕາມ ແລະກວດກາຈາກຂະແໜງການທີ່ກ່ຽວຂ້ອງຊຶ່ງມີເນື້ອໃນຕົ້ນຕໍດັ່ງນີ້:

1. ກວດກາການປະຕິບັດສັນຍາການລົງທຶນ;
2. ກວດກາການປະຕິບັດຂັ້ນຕອນຂອງການລົງທຶນຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ;
3. ກວດກາການປົກປັກຮັກສາສິ່ງແວດລ້ອມ ຕາມການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງຊັບສິນຂອງປະຊາຊົນ, ຂອງລັດ ແລະ ຜູ້ລົງທຶນ;
4. ກວດກາການປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງ;
5. ກວດກາການປະຕິບັດມາດຕະການຄວາມປອດໄພຂອງແຮງງານ.

ອົງການກວດກາການລົງທຶນ ມີສິດສະເໜີມາດຕະການແກ້ໄຂຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນກໍລະນີທີ່ພົບເຫັນການລະເມີດລະບຽບກົດໝາຍກ່ຽວກັບການລົງທຶນ.

**ມາດຕາ 90. (ເກົ່າ 94))(ປັບປຸງ) ປະເພດການກວດກາ**

ການກວດກາມີສອງປະເພດດັ່ງນີ້:

1. ການກວດກາພາຍໃນ ຊຶ່ງແມ່ນອົງການຄຸ້ມຄອງ ແລະ ກວດກາການລົງທຶນ ທີ່ໄດ້ກຳນົດໄວ້ໃນມາດຕາ 83, 84, 85, 86 ແລະ ມາດຕາ 87 ຂອງກົດໝາຍສະບັບນີ້.
2. ການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫລວງ, ອົງການກວດສອບແຫ່ງລັດ ໃນການກວດກາການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນຕາມສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 91. (ເກົ່າ 95) ຮູບການການກວດກາ**

ການກວດກາມີສາມຮູບການດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ;

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍສອງຄັ້ງຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ ຢ່າງໜ້ອຍຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາສາມາດດຳເນີນການກວດກາດ້ານເອກະສານ ແລະ ການປະຕິບັດຕົວຈິງ ຢູ່ສະຖານທີ່ປະຕິບັດງານ.

# ພາກທີ X
# ນະໂຍບາຍຕໍ່ຜູ້ມີຜົນງານແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 92. (ເກົ່າ 96) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ນິຕິບຸກຄົນທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນການລົງທຶນທີ່ມີປະສິດທິຜົນ, ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຶງດູດ ແລະ ການຊຸກຍູ້ການລົງທຶນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

**ມາດຕາ 93. (ເກົ່າ 97) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ນິຕິບຸກຄົນທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດວິໄນ, ປັບໄໝ, ໃຊ້ແທນທາງແພ່ງ ຫລື ດຳເນີນຄະດີ ແລ້ວແຕ່ກໍລະນີເບົາ ຫລື ໜັກຕາມລະບຽບກົດໝາຍ.

# ພາກທີXI
# ບົດບັນຍັດສຸດທ້າຍ

**ມາດຕາ 94. (ເກົ່າ 98)ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 95. (ເກົ່າ 99)(ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫລັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ (15) ວັນ.

ກົດໝາຍສະບັບນີ້ປ່ຽນແທນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ02/ສພຊ, ລົງວັນທີ 08 ກໍລະກົດ 2009. ຜົນປະໂຫຍດຂອງບັນດາວິສາຫະກິດໄດ້ຮັບພາຍໃຕ້ສັນຍາທີ່ໄດ້ເຊັນກັບລັດຖະບານ ກ່ອນໜ້ານີ້ ແມ່ນບໍ່ມີການປ່ຽນແປງຈົນກວ່າສິ້ນສຸດສັນຍາ.

ສຳລັບວິສາຫະກິດທີ່ໄດ້ຮັບອະນຸຍາດກ່ອນກົດໝາຍສະບັບນີ້ ຈະສືບຕໍ່ມີຜົນບັງຄັບໃຊ້ຈົນຄົບ ສິບຫ້າ (15) ປີ ຫຼັງຈາກນັ້ນ ແມ່ນໃຫ້ຫັນມາໃຊ້ກົດໝາຍສະບັບນີ້ ຫຼື ກົດໝາຍທີ່ມີຜົນບັງຄັບໃຊ້ ໃນແຕ່ລະໄລຍະ.

ໃນກໍລະນີທີ່ບັນດາວິສາຫະກິດດັ່ງກ່າວ ຫາກມີຈຸດປະສົງຕ້ອງການຮັບນະໂຍບາຍສົ່ງເສີມການລົງທຶນຕາມກົດໝາຍສະບັບນີ້ ກໍ່ມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ແລ້ວຂະແໜງການດັ່ງກ່າວກໍແຈ້ງໃຫ້ຜູ້ລົງທຶນປະຕິບັດໄດ້ໃນທັນໃດ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ